# ມາດຕະຖານພັນທະ
# ດ້ານສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ
# ສຳລັບໂຄງການພັດທະນາ
# ໃນຂົງເຂດ ຂະແໜງກະສິກຳ ແລະ ປ່າໄມ້

**ຄຳນຳ**

ມາດຕະຖານພັນທະດ້ານສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ສຳລັບ ໂຄງການພັດທະນາ ໃນຂົງເຂດ ຂະ ແໜງກະສິກຳ ແລະ ປ່າໄມ້ ໄດ້ສ້າງຂຶ້ນບົນພື້ນຖານບົດຮຽນ ແລະ ປະສົບການທີ່ຖອດຖອນໄດ້ຈາກວຽກງານຕົວຈິງ ໃນການທົບທວນບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໃນໄລຍະຜ່ານມາ ແລະ ໄດ້ສັງລວມເອົາບົດຮຽນທີ່ດີຈາກຕ່າງປະເທດມານຳໃຊ້ ຊຶ່ງກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ(ກປສສ), ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ(ກຊສ) ໄດ້ປະສານສົມທົບກັບຊ່ຽວຊານທັງພາຍໃນ ແລະ ຕ່າງປະເທດ ໂດຍໄດ້ຮັບການສະໜັບສະໜູນ ທັງທາງດ້ານວິຊາການ ແລະ ຊ່ຽວຊານສະເພາະດ້ານ ອົງການສະຫະປະຊາຊາດເພື່ອການພັດທະນາ ຜ່ານທາງໂຄງການລົງທຶນເຊື່ອມໂຍງສິ່ງແວດລ້ອມເຂົ້າໃນການແກ້ໄຂຄວາມທຸກຍາກ.

ບົດແນະນຳວິຊາການ ສະບັບນີ້ ແມ່ນໄດ້ກຳນົດແຈ້ງ ກ່ຽວກັບ ພັນທະ ແລະ ຮັບຜິດຊອບດ້ານສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຂອງບໍລິສັດ ເຈົ້າຂອງໂຄງການ ເພື່ອກຳນົດເຂົ້າເປັນເອກະສານຊ້ອນທ້າຍຂອງສັນຍາສຳປະທານ, ນອກນັ້ນ ບໍລິສັດ ເປັນເຄື່ອງມືສຳຄັນ ແລະ ມີປະໂຫຍດ ໃຫ້ແກ່ ວິຊາການຂອງ ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ທັງສູນກາງ ແລະ ທ້ອງຖິ່ນ ໂດຍສະເພາະ ກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ (ກປສສ), ໃນການນຳໃຊ້ເຂົ້າໃນການຕິດຕາມກວດກາ ການຈັດຕັ້ງປະຕິບັດມາດຕະການແກ້ໄຂ ຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ເພື່ອຮັບປະກັນວ່າ ພັນທະດ້ານສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທີ່ໄດ້ກຳນົດໄວ້ໃນບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທີ່ຈະໄດ້ຮັບການຮັບຮອງຈາກ ກຊສ ແມ່ນ ໄດ້ຖືກຈັດຕັ້ງປະຕິບັດຢ່າງມີຜະສິດທິຜົນ ແລະ ຄົບຖ້ວນ ໂດຍເຈົ້າຂອງໂຄງການ.

ເຖິງຢ່າງໃດກໍ່ຕາມ, ມາດຕະຖານພັນທະດ້ານສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ສະບັບນີ້ ຈະປັດສະຈາກບໍ່ໄດ້ຄວາມຂາດຕົກບົກຜ່ອງ, ສະນັ້ນ ໃນເວລາຈັດຕັ້ງປະຕິບັດຕົວຈິງ, ຫາກເຫັນວ່າ ເນື້ອໃນທີ່ກຳນົດໄວ້ໃນ ມາດຕະຖານພັນທະດ້ານສິ່ງແວດລ້ອມ ແລະ ທຳມະຊາດ ສະບັບນີ້ ຍັງບໍ່ທັນມີຄວາມຈະແຈ້ງ, ຄົບຖ້ວນສົມບູນ ແລະ ຍັງບໍ່ທັນແທດເໝາະກັບສະພາບການລົງທຶນ ແລະ ການຂະຫຍາຍຕົວຂອງປະເທດຊາດໃນແຕ່ລະໄລຍະນັ້ນ, ກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຈະໄດ້ປັບປຸງ ແລະ ແກ້ໄຂເພີ່ມເຕີມຕາມຄວາມເໝາະສົມ ໃຫ້ໄປຕາມແຕ່ລະໄລຍະ.

ດັ່ງນັ້ນ, ຂ້າພະເຈົ້າຫວັງວ່າ ມາດຕະຖານພັນທະ ສະບັບນີ້ ຈະຊ່ວຍໃຫ້ພະນັກງານວິຊາການ ຂອງຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ທັງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ໂດຍສະເພາະ ວິຊາການຂອງກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ມີຄວາມເຂົ້າໃຈ ແລະ ສາມາດຈັດຕັ້ງປະຕິບັດ ມາດຕະຖານພັນທະ ສະບັບນີ້ ໄດ້ເປັນຢ່າງດີ ແລະ ມີປະສິດທິຜົນ ຫລາຍຂຶ້ນກ່ວາເກົ່າ.

ນະຄອນຫລວງວຽງຈັນ, ວັນທີ....... ເດືອນ...... ປີ 2016

ຫົວໜ້າ ກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ

## ພາກທີ I - ຫລັກການນຳໃຊ້ທົ່ວໄປ

### 1. ການອະທິບາຍຄຳສັບ ແລະ ການຕີຄວາມໝາຍ

- ເວັ້ນເສຍແຕ່ໄດ້ມີການກຳນົດຄວາມຕ້ອງການໃຫ້ເປັນຢ່າງອື່ນ, ຄຳສັບ ແລະ ຄວາມໝາຍທີ່ລະບຸໄວ້ໃນເອກະສານຄັດຕິດ ແມ່ນຈະມີຄວາມໝາຍດຽວກັນກັບເອກະສານຊ້ອນທ້າຍ ທີ່ໄດ້ກຳນົດໄວ້;
- ຄຳສັບ ແລະ ສຳນວນທີ່ກຳນົດໄວ້ໃນສັນຍາສຳປະທານ ແຕ່ບໍ່ໄດ້ກຳນົດໄວ້ໃນເອກະສານຄັດຕິດ 1 ຂອງເອກະສານຊ້ອນທ້າຍສະບັບນີ້ ຕ້ອງມີຄວາມໝາຍດຽວກັນ ໃນເວລານຳໃຊ້ເອກະສານຊ້ອນທ້າຍສະບັບນີ້, ເວັ້ນເສຍແຕ່ໄດ້ກຳນົດໄວ້ສະເພາະເປັນຢ່າງອື່ນ;
- ເອກະສານຊ້ອນທ້າຍສະບັບນີ້ ແມ່ນເອກະສານຄັດຕິດ ຂອງສັນຍາສຳປະທານ, ໂດຍເນື້ອໃນທັງໝົດໄດ້ອ້າງອີງເຖິງສັນຍາສຳປະທານ ແລະ ມີອາຍຸນຳໃຊ້ຕະຫລອດໄລຍະສັນຍາສຳປະທານໂຄງການ ຊຶ່ງເປັນສ່ວນໜຶ່ງທີ່ມີຄວາມສຳຄັນ ຕໍ່ຜົນບັງຄັບໃຊ້ ແລະ ຂໍ້ຜູກພັນ ທາງດ້ານກົດໝາຍ ຂອງສັນຍາສຳປະທານ;
- ເອກະສານຊ້ອນທ້າຍສະບັບນີ້ ລວມມີ ເອກະສານຄັດຕິດທັງໝົດ ດັ່ງລຸ່ມນີ້:

i. ເອກະສານຄັດຕິດ 1 ການອະທິບາຍຄຳສັບ;
ii. ເອກະສານຄັດຕິດ 2 ກົດໝາຍ, ລະບຽບການ ແລະ ມາດຕະຖານ ທີ່ກ່ຽວຂ້ອງ ຂອງ ສປປ ລາວ ແລະ ສາກົນ;
iii. ເອກະສານຄັດຕິດ 3 ງົບປະມານ;
iv. ເອກະສານຄັດຕິດ 4 ການປັບໄໝ;
v. ເອກະສານຄັດຕິດ 5 ຕາຕະລາງຜົນກະທົບ ແລະ ມາດຕະການແກ້ໄຂ ຫລຸດຜ່ອນ;
vi. ເອກະສານຄັດຕິດ 6 ແຜນການເຕັກນິກສະເພາະ;
vii. ເອກະສານຄັດຕິດ 7 ສິດ ຂອງຜູ້ໄດ້ຮັບຜົນກະທົບ;
viii. ເອກະສານຄັດຕິດ 8 ຄະນະຮັບຜິດຊອບ ການທົດແທນຄ່າເສຍຫາຍ;
ix. ເອກະສານຄັດຕິດ 9 ຂັ້ນຕອນການແກ້ໄຂຂໍ້ສະເໜີຂອງຜູ້ໄດ້ຮັບຜົນກະທົບ;

### 2. ພັນທະຂອງບໍລິສັດ ຕໍ່ເອກະສານຊ້ອນທ້າຍ

ບໍລິສັດ ຕ້ອງຈັດຕັ້ງປະຕິບັດພັນທະທັງໝົດ ທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍສະບັບນີ້ ໃນທຸກດ້ານ, ຢ່າງເຕັມສ່ວນ, ມີປະສິດທິຜົນ ແລະ ປະຕິບັດໄດ້ຢ່າງຕໍ່ເນື່ອງ ຕະຫລອດໄລຍະສຳປະທານໂຄງການ.

### 3. ພັນທະຂອງບໍລິສັດ ຕໍ່ການປະຕິບັດກົດໝາຍ, ລະບຽບການ ແລະມາດຕະຖານທີ່ກ່ຽວຂ້ອງ ຂອງ ສປປ ລາວ ແລະ ສາກົນ

ບໍລິສັດ ຕ້ອງຈັດຕັ້ງປະຕິບັດໂຄງການຂອງຕົນ ໂດຍໃຫ້ຖືກຕ້ອງ ແລະ ສອດຄ່ອງກັບ ກົດໝາຍ, ລະບຽບການ ແລະ ມາດຕະຖານ ທີ່ກ່ຽວຂ້ອງ ຂອງ ສປປ ລາວ ແລະ ສາກົນ ຕາມທີ່ໄດ້ກຳນົດໄວ້ໃນ ເອກະສານຄັດຕິດ 2.

### 4. ພັນທະຂອງບໍລິສັດ ໃນການສະໜອງງົບປະມານ

1. ຕ້ອງສະໜອງງົບປະມານ ໃຫ້ແກ່ລັດຖະບານ ສຳລັບແຕ່ລະລາຍການງົບປະມານ ຕາມທີ່ໄດ້ກຳນົດໄວ້ໃນເອກະສານຄັດຕິດ 3 ຂອງເອກະສານຊ້ອນທ້າຍສະບັບນີ້ ພາຍໃນ 10 ວັນ ຫລັງຈາກສັນຍາສຳປະທານມີຜົນບັງຄັບໃຊ້ ແລະ ໃຫ້ຖືກຕ້ອງທ່ວງທັນ ກັບໄລຍະເວລາ ທີ່ໄດ້ກຳນົດໄວ້ໃນແຜນງົບປະມານ ທີ່ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ) ແລະ ບໍລິສັດ ໄດ້ຕົກລົງຮ່ວມກັນ;

2. ຕ້ອງຮັບຜິດຊອບ ຕໍ່ຄວາມບໍ່ຖືກຕ້ອງ, ບໍ່ຄົບຖ້ວນ ຫລື ຄວາມຜິດພາດ (ໂດຍເຈດຕະນາ ຫລື ບໍ່ເຈດຕະນາ) ໃນການຄາດຄະເນ ງົບປະມານແຕ່ລະລາຍການ ທີ່ໄດ້ກຳນົດໄວ້ໃນເອກະສານຄັດຕິດ 3 ຂອງເອກະສານຊ້ອນທ້າຍສະບັບນີ້ ໂດຍຕ້ອງໄດ້ປຶກສາຫາລືກັບ ກຊສ ເພື່ອປັບປຸງແກ້ໄຂຄືນ ແຜນງົບປະມານ ທີ່ຮັບຮອງເອົາໄປແລ້ວນັ້ນ ໃຫ້ມີຄວາມຖືກຕ້ອງ, ຄົບຖ້ວນ ແລະ ສອດຄ່ອງກັບສະພາບຄວາມເປັນຈິງ.

## 5. ພັນທະຂອງບໍລິສັດ ກ່ຽວກັບ ຂໍ້ມູນ ຂ່າວສານ

1. ຕະລອດໄລຍະເວລາສຳປະທານໂຄງການ, ບໍລິສັດ ຕ້ອງນຳສົ່ງຂໍ້ມູນ ຂ່າວສານທີ່ກ່ຽວຂ້ອງກັບໂຄງການ ໃຫ້ແກ່ລັດຖະບານ ຕາມການຮຽກຮ້ອງຂອງລັດຖະບານ;
2. ບໍລິສັດ ຕ້ອງໄດ້ປັບປຸງຂໍ້ມູນ ຂ່າວສານ ໃຫ້ມີຄວາມຖືກຕ້ອງ, ສອດຄ່ອງຢ່າງເປັນປະຈຳ ແລະ ຕ້ອງອຳນວຍຄວາມສະດວກ ໃຫ້ແກ່ລັດຖະບານ ສາມາດເຂົ້າເຖິງຂໍ້ມູນ ຂ່າວສານ ໃນກໍລະນີມີການຕິດຕາມກວດກາແບບກະທັນຫັນ ພ້ອມຍັງສະໜອງຂໍ້ມູນ ຂ່າວສານໃນຮູບແບບພິມ ແລະ/ຫລື ເອກະສານໃນຮູບແບບອີເລັກໂຕຣນິກ ຕາມການຮຽກຮ້ອງ;
3. ໃນໄລຍະເວລາສິ້ນສຸດອາຍຸສຳປະທານໂຄງການ, ບໍລິສັດ ຕ້ອງສະໜອງຂໍ້ມູນ ຂ່າວສານ ໃນຮູບແບບພິມສະບັບສົມບູນ ແລະ/ຫລື ເອກະສານໃນຮູບແບບອີເລັກໂຕຣນິກ ໃຫ້ແກ່ລັດຖະບານ;
4. ບໍລິສັດ ຕ້ອງເກັບກຳຂໍ້ມູນພື້ນຖານ ແລະ ການວັດແທກຂໍ້ມູນພື້ນຖານທີ່ຈຳເປັນ ກ່ອນ ບໍລິສັດເລີ່ມຕົ້ນດຳເນີນກິດຈະກຳໃດໆຂອງໂຄງການ. ບໍລິສັດ ຕ້ອງ ອະນຸຍາດໃຫ້ຜູ້ຕາງໜ້າຂອງລັດຖະບານ ທີ່ກ່ຽວຂ້ອງເຂົ້າຮ່ວມໃນການເກັບກຳຂໍ້ມູນພື້ນຖານ ໃນກໍລະນີມີຄວາມຈຳເປັນ;
5. ໃນກໍລະນີ ຂໍ້ມູນ ຂ່າວສານທີ່ເປັນຄວາມລັບທາງດ້ານທຸລະກິດ ທີ່ບໍ່ສາມາດເປີດເຜີຍສູ່ສາທາລະນະ ແລະໄດ້ຮັບການພິຈາລະນາ ໃຫ້ສິດໃນການປົກປ້ອງເປັນຄວາມລັບຈາກລັດຖະບານ, ລັດຖະບານ ຈະເຜີຍແຜ່ຂໍ້ມູນ ຂ່າວສານດັ່ງກ່າວ ສູ່ສາທາລະນະ ໂດຍເອົາຂໍ້ມູນທີ່ ເປັນຄວາມລັບທາງດ້ານເສດຖະກິດ ລົບອອກ.

## 6. ຄວາມຮັບຜິດຊອບຂອງບໍລິສັດ ຕໍ່ກັບຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ທີ່ເກີດຈາກໂຄງການ ແລະ ກິດຈະກຳຕ່າງໆທີ່ກ່ຽວຂ້ອງ

1. ບໍລິສັດ ບໍ່ວ່າຈະທາງກົງ ຫຼື ຜ່ານການວ່າຈ້າງຜູ້ອື່ນ, ຕ້ອງມີຄວາມຮັບຜິດຊອບທາງດ້ານກົດໝາຍ ແລະການເງິນ ຕໍ່ກັບຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດທັງໝົດ ທີ່ເກີດຂຶ້ນຈາກໂຄງການ ຫລືກິດຈະກຳຕ່າງໆທີ່ກ່ຽວຂ້ອງ;
2. ບໍລິສັດ ຕ້ອງຫລຸດຜ່ອນ ແກ້ໄຂຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ໂດຍປ້ອງກັນ ຫລື ຫລີກລ້ຽງ ແລະ ປົວແປງຢ່າງເໝາະສົມ ຫລື ດ້ວຍການທົດແທນຄ່າເສຍຫາຍ ໃຫ້ແກ່ ຜູ້ໄດ້ຮັບຜົນກະທົບ, ຕາມແຕ່ລະກໍລະນີ.

## 7. ຄວາມຮັບຜິດຊອບຂອງບໍລິສັດ ກ່ຽວກັບ ບຸກຄົນທີ່ເຮັດວຽກໃຫ້ແກ່ບໍລິສັດ

1. ບໍລິສັດ ຕ້ອງຮັບປະກັນ ວ່າ ທຸກຄົນທີ່ເຮັດວຽກໃຫ້ບໍລິສັດ ຕ້ອງປະຕິບັດຢ່າງເຂັ້ມງວດ ຕາມກົດໝາຍ, ລະບຽບການ, ມາດຕະຖານ ທີ່ກ່ຽວຂ້ອງ ຂອງ ສປປ ລາວ ແລະ ສາກົນ ລວມທັງ ພັນທະຕ່າງໆ ທີ່ໄດ້ກຳນົດໄວ້ໃນເອກະສານຊ້ອຍທ້າຍສະບັບນີ້;
2. ໃນກໍລະນີ ບຸກຄົນທີ່ເຮັດວຽກໃຫ້ບໍລິສັດ ປະຕິບັດບໍ່ຖືກຕ້ອງ ຕາມກົດໝາຍ, ລະບຽບການ, ມາດຕະຖານທີ່ກ່ຽວຂ້ອງ ຂອງ ສປປ ລາວ ແລະ ສາກົນ ລວມທັງ ພັນທະຕ່າງໆ ທີ່ໄດ້ກຳນົດໄວ້ໃນເອກະສານຊ້ອຍທ້າຍ ສະບັບນີ້ ຈະຖືເປັນຄວາມບົກພ່ອງ ແລະຍັງຖືເປັນຄວາມຮັບຜິດຊອບຂອງບໍລິສັດ ທີ່ຕ້ອງໄດ້ປັບປຸງແກ້ໄຂ;

3. ບໍລິສັດ ຕ້ອງດຳເນີນການ ຢ່າງຮີບດ່ວນ ໃນການປັບແປງ ຫລື ແກ້ໄຂຄວາມບົກພ່ອງທີ່ເກີດຂຶ້ນ ຈາກການກະທຳຂອງບໍລິສັດເອງ ຫລື ເປັນຄວາມບົກພ່ອງຂອງບຸກຄົນທີ່ເຮັດວຽກໃຫ້ແກ່ບໍລິສັດ.

## 8. ການລາຍງານ

ບໍລິສັດ ຕະຫລອດໄລຍະເວລາສຳປະທານໂຄງການ ຕ້ອງໄດ້ປະຕິບັດພັນທະ ໃນການສ້າງ ແລະ ນຳສົ່ງບົດລາຍງານສະພາບການຈັດຕັ້ງປະຕິບັດ ພັນທະດ້ານສິ່ງແວດລ້ອມສັງຄົມ ແລະ ທຳມະຊາດຂອງໂຄງການໃຫ້ລັດຖະບານ ດັ່ງນີ້:

1. ຕ້ອງໄດ້ສ້າງ ແລະນຳສົ່ງ ບົດລາຍງານເປັນແຕ່ລະໄລຍະເວລາ, ເຊັ່ນ: ເປັນປະຈຳເດືອນ, ປະຈຳໄຕມາດ ແລະ ປະຈຳປີ ຊຶ່ງບົດລາຍງານ ຕ້ອງໃຫ້ສອດຄ່ອງກັບຮູບແບບຂອງ ກຊສ ໄດ້ກຳນົດໄວ້;
2. ບໍລິສັດ ຕ້ອງນຳສົ່ງບົດລາຍງານໂດຍກົງ ເຖິງ ກຊສ ແລະ ຂະແໜງການຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ ຂັ້ນທ້ອງຖິ່ນ ໃນແຕ່ລະລະດັບທີ່ກ່ຽວຂ້ອງ ໃນຈຳນວນທີ່ພຽງພໍ ກັບຄວາມຮຽກຮ້ອງຕ້ອງການ ຂອງພາກສ່ວນທີ່ກ່ຽວຂ້ອງ;
3. ສຳລັບເຫດການອຸປະຕິເຫດ ຫລືເຫດການສຸກເສີນທາງດ້ານສິ່ງແວດລ້ອມ ລວມທັງ ການລະເມີດໃດຫນຶ່ງຂອງບໍລິສັດທີ່ເກີດຂຶ້ນ ແລະສົ່ງຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດຢ່າງຮຸນແຮງ, ບໍລິສັດ ຕ້ອງສ້າງ ແລະ ນຳສົ່ງບົດລາຍງານ ພາຍໃນ 24 (ຊາວສີ່) ຊົ່ວໂມງ ນັບຕັ້ງແຕ່ບໍລິສັດ ໄດ້ຮັບຮູ້ເຫດການເຫລົ່ານັ້ນເກີດຂຶ້ນ ໃຫ້ທັງ ກຊສ ແລະ ຂະແໜງການຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມຂັ້ນທ້ອງຖິ່ນ ໃນແຕ່ລະລະດັບ ທີ່ກ່ຽວຂ້ອງ ຮັບຊາບຢ່າງທັນການ.

## 9. ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ

1. ບໍລິສັດ ຕ້ອງຮັບປະກັນໃຫ້ໂຄງການຕົນ ໄດ້ຮັບ ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ຮັບຮອງເອົາ ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ (ບປຜສ) ລວມທັງ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ (ຜຄຕສ) ທີ່ປະກອບດ້ວຍບັນດາເງື່ອນໄຂຕ່າງໆ ຈາກ ກຊສ ກ່ອນ ສັນຍາສຳປະທານໂຄງການມີຜົນບັງຄັບໃຊ້ ໂດຍປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ;
2. ບໍລິສັດ ຕ້ອງປະຕິບັດຢ່າງເຂັ້ມງວດ ບັນດາເງື່ອນໄຂຕ່າງໆທີ່ກຳນົດໄວ້ ໃນເອກະສານຄັດຕິດຂອງໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ;
3. ບໍລິສັດ ຫາກລະເມີດ ຫລື ມີຄວາມບົກພ່ອງ ໃນການປະຕິບັດເງື່ອນໄຂຕ່າງໆທີ່ໄດ້ກຳນົດໄວ້ໃນໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ຖືເປັນການລະເມີດໜຶ່ງ ທີ່ ກຊສ ມີສິດສັ່ງໂຈະ ຫລື ເລີກຖອນ ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ທີ່ໄດ້ອອກໃຫ້ແລ້ວນັ້ນ ຫລື ຖືກປັບໄໝ ຕາມລາຍການທີ່ໄດ້ລະບຸໄວ້ໃນເອກະສານຄັດຕິດ 4 ຂອງເອກະສານຊ້ອນທ້າຍສະບັບນີ້ ທັງຖືເປັນການລະເມີດສັນຍາສຳປະທານຂອງຝ່າຍບໍລິສັດ.

## 10. ການຈັດຕັ້ງ ການຄຸ້ມຄອງ ແລະ ຕິດຕາມກວດກາ ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໂຄງການ

ການຈັດຕັ້ງ ການຄຸ້ມຄອງ ແລະ ຕິດຕາມກວດກາ ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໂຄງການປະກອບດ້ວຍ:

1. ບໍລິສັດ ຊຶ່ງຕ້ອງດໍາເນີນການຄຸ້ມຄອງ ການປະຕິບັດພັນທະດ້ານສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ ຂອງໂຄງການ ຢ່າງຕໍ່ເນື່ອງ ທັງເປັນເຈົ້າການ ໃນການຕິດຕາມກວດກາ ດ້ວຍຕົນເອງ ໂດຍສ້າງຕັ້ງ ຫ້ອງການ ທີ່ປະກອບດ້ວຍພະນັກງານຈໍານວນໜຶ່ງທີ່ມີຄຸນະວຸດທິ ເພື່ອເປັນຈຸດປະສານງານ ພາຍໃນ ໂຄງການ, ຮັບຜິດຊອບໃນການຈັດຕັ້ງປະຕິບັດມາດຕະການ ສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ ຂອງໂຄງການ ພ້ອມທັງ ລາຍງານລັດຖະບານຢ່າງເປັນປະຈໍາ;
2. ກຊສ, ຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມຂັ້ນທ້ອງຖິ່ນ, ຂະແໜງການອື່ນທີ່ ກ່ຽວຂ້ອງ ແລະ ຄະນະສະເພາະກິດ ທີ່ໄດ້ຮັບການສ້າງຕັ້ງຂຶ້ນ ພາຍໃຕ້ເອກະສານຊ້ອນທ້າຍສະບັບນີ້ ມີ ສິດ ໃນການຄຸ້ມຄອງ ແລະ ຕິດຕາມກວດກາ ບໍລິສັດ ປະຕິບັດພັນທະດ້ານສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ ຕາມບົດບັນຍັດທີ່ໄດ້ກໍານົດໄວ້ໃນ ກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ ໂດຍສະເພາະ ກົດໝາຍ ວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບປັບປຸງ ສະບັບເລກທີ 29/ ສພຊ, ລົງວັນທີ 18 ທັນວາ 2012, ດໍາລັດວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນ ຍົກຍ້າຍປະຊາຊົນ ຈາກໂຄງການພັດທະນາ ສະບັບເລກທີ.........., ລົງວັນທີ........, ຄໍາແນະນໍາ ສະບັບເລກທີ 8030/ກຊສ, ບັນດາເງື່ອນໄຂຄັດຕິດໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ແລະ ຂໍ້ຕົກລົງ ແຕ່ງຕັ້ງຄະນະກໍາມະການສະເພາະກິດ ທີ່ກ່ຽວຂ້ອງ ລວມທັງ ບົດບັນຍັດທີ່ກໍານົດໄວ້ໃນເອກະສານຊ້ອນ ທ້າຍສະບັບນີ້.

## 11. ການແຈ້ງເຕືອນ ແລະ ການປັບໄໝບໍລິສັດ

1. ພາຍຫລັງໄດ້ຮັບການລາຍງານ ຈາກຄະນະຕິດຕາມກວດກາ ໂດຍໄດ້ຮັບການພິຈາລະນາ ຢ່າງສົມເຫດສົມ ຜົນ ເຫັນວ່າ ກິດຈະກໍາ ຫລື ການປະລະ ເມີນເສີຍຂອງບໍລິສັດ ກໍ່ໃຫ້ເກີດຄວາມສ່ຽງຢ່າງຫລວງຫລາຍ ຊຶ່ງ ຈະເປັນການລະເມີດພັນທະຂອງໂຄງການ, ກຊສ ຈະໄດ້ອອກໜັງສືແຈ້ງເຕືອນ ໃຫ້ບໍລິສັດ ນໍາເອົາໄປຄົ້ນຄ້ ວາຈັດຕັ້ງປະຕິບັດ ແນໃສ່ການຮັບປະກັນວ່າ ການລະເມີດດັ່ງກ່າວຈະບໍ່ເກີດຂຶ້ນ;
2. ກຊສ ມີສິດບັງຄັບປະຕິບັດການປັບໄໝ ຕໍ່ບໍລິສັດ ສໍາລັບການລະເມີດ, ການປະຕິບັດບໍ່ສອດຄ່ອງ ກັບ ພັນທະຂອງບໍລິສັດ ຕາມທີ່ໄດ້ລະບຸໄວ້ໃນເອກະສານຄັດຕິດ 4 ຂອງເອກະສານຊ້ອນທ້າຍສະບັບນີ້, ໂດຍ ອັດຕາການປັບໄໝທີ່ຈະຈ່າຍໃຫ້ ກຊສ ແມ່ນໄດ້ກໍານົດໄວ້ໃນເອກະສານຄັດຕິດ 4;
3. ກຊສ ຈະກໍານົດເວລາ ຢູ່ໃນຂອບເຂດ ບໍ່ເກີນ 90 (ເກົ້າສິບ) ວັນ ສໍາລັບການແຈ້ງເຕືອນຄັ້ງທໍາອິດ ນັບແຕ່ ວັນເວລາອອກໜັງສືແຈ້ງເຕືອນເປັນຕົ້ນໄປ ເພື່ອໃຫ້ບໍລິສັດ ໄປປັບປຸງແກ້ໄຂ ຂໍ້ຜິດພາດຂອງຕົນ. ໃນ ກໍລະນີບໍລິສັດ ຫາກບໍ່ສາມາດປັບປຸງແກ້ໄຂໄດ້, ກຊສ ຈະອອກແຈ້ງເຕືອນຄັ້ງທີສອງ ໂດຍກໍານົດເວລາ ເພີ່ມເຕີມ ຢູ່ໃນຂອບເຂດ ບໍ່ເກີນ 60 (ຫົກສິບ) ວັນ ນັບແຕ່ວັນເວລາອອກໜັງສືແຈ້ງເຕືອນຄັ້ງທີສອງ ເປັນຕົ້ນໄປ ເພື່ອໃຫ້ບໍລິສັດໄດ້ໄປສືບຕໍ່ປັບປຸງແກ້ໄຂ ໂດຍການແຈ້ງເຕືອນທຸກຄັ້ງ ຕ້ອງໄດ້ມີການລົງນາມ ໃສ່ບົດບັນທຶກຮ່ວມກັນເພື່ອເປັນຫລັກຖານ ແລະ ຖ້າຍັງເຫັນວ່າບໍລິສັດບໍ່ສາມາດປັບປຸງແກ້ໄຂໄດ້, ກຊສ ຕ້ອງໄດ້ປັບໄໝ ໂດຍບໍລິສັດຕ້ອງຊໍາລະພາຍໃນໄລຍະເວລາ 30 (ສາມສິບ) ວັນ ຫລັງຈາກ ກຊສ ອອກ ໜັງສືແຈ້ງການໃຫ້ບໍລິສັດຮັບຊາບ ຫລື ເລີກຖອນໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ຂຶ້ນກັບແຕ່ລະກໍລະນີ ທີ່ ກຊສ ເຫັນວ່າຖືກຕ້ອງ ແລະ ມີຄວາມເໝາະສົມ;
4. ສິດຂອງ ກຊສ ໃນການບັງຄັບໃຊ້ການປັບໄໝ ຕໍ່ບໍລິສັດ ສາມາດນໍາໃຊ້ຍ້ອນຫລັງຕໍ່ການລະເມີດ ຫລື ການປະຕິບັດບໍ່ສອດຄ່ອງກັບ ພັນທະໃດໜຶ່ງ ທີ່ກໍານົດໄວ້ໃນເອກະສານຊ້ອນທ້າຍສະບັບນີ້ ຊຶ່ງບໍລິສັດໄດ້ ກະ ທໍາຜິດ ກ່ອນວັນທີ່ສັນຍາສໍາປະທານມີຜົນສັກສິດ;

5. ບໍລິສັດ ຈະບໍ່ຖືກປັບໄໝ ໃນກໍລະນີ ການລະເມີດ ຫລື ການປະຕິບັດບໍ່ສອດຄ່ອງ ທີ່ ກຊສ ຮັບຮູ້ ແລະຖື ວ່າ ເປັນເຫດການສຸດວິໄສ ແຕ່ ບໍລິສັດ ຕ້ອງດໍາເນີນການແກ້ໄຂຢ່າງທັນທີ ຕໍ່ການລະເມີດ ຫລື ການ ປະຕິບັດບໍ່ສອດຄ່ອງ ພາຍຫລັງເຫດການສຸດວິໄສນັ້ນສິ້ນສຸດລົງ.

## ພາກທີ - II ພັນທະດ້ານສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ

### 12. ພັນທະ ໃນການຈັດຕັ້ງປະຕິບັດ ມາດຕະການແກ້ໄຂ ຫລຸດຜ່ອນ ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະຜົນກະທົບຕໍ່ສິ່ງແວດລ້ອມທໍາມະຊາດ

1. ບໍລິສັດ ຕ້ອງຈັດຕັ້ງປະຕິບັດຢ່າງເຂັ້ມງວດ ມາດຕະການແກ້ໄຂ ຫລຸດຜ່ອນ ຜົນກະທົບຕໍ່ສິ່ງແວດລ້ອມ ສັງຄົມ ແລະ ຜົນກະທົບຕໍ່ສິ່ງແວດລ້ອມທໍາມະຊາດ ຕາມທີ່ໄດ້ກໍານົດໄວ້ໃນຕາຕະລາງຊີ້ແຈງໃນ ເອກະສານຄັດຕິດ 5 ພ້ອມທັງ ຮັບປະກັນ ໃຫ້ບັນດາຜູ້ຮັບເໝົາລວມ ແລະ ບັນດາຜູ້ຮັບເໝົາຍ່ອຍ ຂອງ ໂຄງການ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດໃຫ້ໄດ້ດີ ແລະ ມີປະສິດທິຜົນເຊັ່ນດຽວກັນ;
2. ບໍລິສັດ ຕ້ອງ ປະຕິບັດບັນດາເງື່ອນໄຂ ທີ່ກໍານົດໄວ້ໃນໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ທີ່ຮັບຮອງເອົາ ບປຜສ ລວມທັງ ຜຄຕສ ສະບັບເລກທີ................., ລົງວັນທີ............ ແລະ ໜັງສືຕໍ່ອາຍຸ ໃບຢັ້ງຢືນ ກ່ຽວກັບສິ່ງແວດລ້ອມ ທີ່ຮັບຮອງເອົາ ຜຄຕສ ສະບັບປັບປຸງ ຖັດມາ ຈົນຮອດສິ້ນສຸອາຍຸສໍາປະທານ ໂຄງການ;
3. ໃນກໍລະນີ ຫາກມີ ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ຜົນກະທົບຕໍ່ສິ່ງແວດລ້ອມທໍາມະຊາດ ເກີດຂຶ້ນ ໂດຍບໍ່ໄດ້ກໍານົດໄວ້ໃນ ບປຜສ ລວມທັງ ຜຄຕສ ກໍຄື ໃນຕາຕະລາງຊີ້ແຈງ ໃນເອກະສານຄັດຕາຈິດ 5, ບໍລິສັດ ຕ້ອງຮັບຜິດຊອບເພີ່ມເຕີມ ໃນການກໍານົດ ແລະ ຈັດຕັ້ງປະຕິບັດ ມາດຕະການແກ້ໄຂ ຫລຸດຜ່ອນ ບັນດາຜົນກະທົບເຫລົ່ານັ້ນ ພ້ອມທັງກໍານົດ ການຈັດຕັ້ງຮັບຜິດຊອບ, ງົບປະມານ ແລະ ວັນເວລາ ຈັດຕັ້ງ ປະຕິບັດ ຢ່າງຖືກຕ້ອງ ແລະ ຊັດເຈນ;
4. ບໍລິສັດ ຕ້ອງຮັບຜິດຊອບຢ່າງເຕັມສ່ວນ ຕໍ່ລະບຽບກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ ແລະ ທາງດ້ານການເງິນ ທີ່ຕິດພັນກັບ ທຸກການເຄື່ອນໄຫວ, ຂໍ້ຜິດພາດ ແລະ ຜົນກະທົບທາງລົບທັງໝົດ ທີ່ເກີດຂຶ້ນຈາກໂຄງການຕົນ ທີ່ເປັນທັງ ບໍລິສັດກະທໍາເອງ ແລະ ຜູ້ຮັບເໝົາລວມ, ຜູ້ຮັບເໝົາຍ່ອຍ, ພະນັກ ງານ-ກໍາມະກອນ, ຕົວແທນ, ຜູ້ຕາງໜ້າ, ຊ່ຽວຊານ/ທີ່ປຶກສາ ຫລື ຜູ້ອື່ນໆ ທີ່ໄດ້ຮັບການມອບສິດຕາງໜ້າ ບໍລິສັດ ດໍາເນີນກິດຈະກໍາຕ່າງໆຂອງໂຄງການ.

### 13. ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ (ຜຄຕສ)

1. ບໍລິສັດ ຕ້ອງຈັດຕັ້ງປະຕິບັດຢ່າງເຂັ້ມງວດ ຜຄຕສ ສະບັບເດືອນ ........... ປີ ............ ແລະ ຜຄຕສ ສະບັບປັບປຸງ ຖັດມາ ທີ່ ກຊສ ໄດ້ຮັບຮອງ;
2. ບໍລິສັດ ພາຍໃນ 6 ເດືອນ ກ່ອນເລີ່ມຕົ້ນການກໍ່ສ້າງ ແລະ ການດໍາເນີນໂຄງການ ຕ້ອງໄດ້ສ້າງແຜນການ ຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ ສະເພາະໄລຍະກໍ່ສ້າງ ແລະການດໍາ ເນີນໂຄງການ ເພີ່ມເຕີມ ຊຶ່ງເປັນແຜນການຈັດຕັ້ງປະຕິບັດອັນລະອຽດ ສະເພາະໃນໄລຍະກໍ່ສ້າງ ແລະ ການ ດໍາເນີນໂຄງການ ສໍາລັບບໍລິສັດ ກໍຄື ບັນດາຜູ້ຮັບເໝົາລວມ, ຜູ້ຮັບເໝົາຍ່ອຍ ແລ້ວນໍາສະເໜີ ກຊສ ພິຈາລະນາຮັບຮອງເອົາກ່ອນ ຈຶ່ງເລີ່ມຕົ້ນການກໍ່ສ້າງ ແລະ ການດໍາເນີນໂຄງການ;

3. ຫ້າມການກໍ່ສ້າງ ແລະ ດຳເນີນໂຄງການ ໃນກໍລະນີ ຜຄຕສ ສະເພາະໄລຍະກໍ່ສ້າງ ແລະ ການດຳເນີນໂຄງການ ຍັງບໍ່ທັນໄດ້ຜ່ານການຮັບຮອງ ຈາກ ກຊສ ແລະ ຖ້າຫາກມີການລະເມີດ ບໍລິສັດ ຕ້ອງໄດ້ຖືກປັບໄໝ ຕາມທີ່ໄດ້ກຳນົດໄວ້ໃນເອະສານຄັດຕິດ 4;
4. ໃນກໍລະນີ, ຜຄຕສ ສະບັບທີ່ຖືກຮັບຮອງຈາກ ກຊສ ໄປແລ້ວ ຍັງບໍ່ທັນກວມລວມເອົາແຜນການເຕັກນິກສະເພາະໃດໜຶ່ງ ຫລືທັງໝົດ ດັ່ງຊີ້ແຈງໃນເອກະສານຄັດຕິດ 6 ບໍລິສັດ ຕ້ອງ ສ້າງ ແລະ ນຳສະເໜີແຜນການເຕັກນິກສະເພາະ ໃຫ້ ກຊສ ພິຈາລະນາຮັບຮອງ ຫລັງຈາກ ສັນຍາສຳປະທານມີຜົນບັງຄັບໃຊ້ 60 ວັນ.

### 14. ການມີສ່ວນຮ່ວມກັບມວນຊົນ

ການຈັດຕັ້ງປະຕິບັດ ມາດຕະການດ້ານສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ລວມທັງ ການສ້າງ ແລະ ການປະຕິບັດແຜນການທົດແທນຄ່າເສຍຫາຍ ຂອງບໍລິສັດ ຕ້ອງໃຫ້ມີການເຂົ້າຮ່ວມຂອງການຈັດຕັ້ງ, ອົງການປົກຄອງຂັ້ນທ້ອງຖິ່ນ ແລະ ປະຊາຊົນທີ່ກ່ຽວຂ້ອງ ໂດຍສະເພາະ ຜູ້ໄດ້ຮັບຜົນກະທົບໂດຍກົງ ຫລືທາງອ້ອມ.

### 15. ການບູລະນະຟື້ນຟູ

1. ບໍລິສັດ ຕ້ອງຮັບຜິດຊອບສຳລັບການບູລະນະຟື້ນຟູ ພື້ນທີ່ຂອງໂຄງການທີ່ຖືກຜົນກະທົບ ເພື່ອຮັບປະກັນເຂດດັ່ງກ່າວ ໄດ້ຮັບການຟື້ນຟູກັບຄືນສູ່ສະພາບທີ່ສາມາດດຳເນີນການໄດ້ ທັງມີຄວາມປອດໄພ, ໝັ້ນຄົງ, ບໍ່ມີຄວາມສ່ຽງຈາກໄພອັນຕະລາຍ ຕໍ່ສຸຂະພາບຂອງປະຊາຊົນ ໂດຍດຳເນີນການໃຫ້ສອດຄ່ອງກັບແຜນການບູລະນະຟື້ນຟູສິ່ງແວດລ້ອມ ແລະແຜນການອື່ນທີ່ກ່ຽວຂ້ອງ ຂອງໂຄງການ ທີ່ໄດ້ຜ່ານການຮັບຮອງຈາກ ກຊສ;
2. ໃນໄລຍະເວລາ ບໍ່ເກີນ 3 (ສາມ) ປີ ກ່ອນໝົດໄລຍະເວລາ ສັນຍາສຳປະທານໂຄງການ, ບໍລິສັດ ຕ້ອງນຳສົ່ງ ແຜນການບູລະນະຟື້ນຟູ ໃຫ້ ກຊສ ພິຈາລະນາຮັບຮອງ ຊຶ່ງແຜນການດັ່ງກ່າວ ຕ້ອງດຳເນີນການ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບຮູບແບບ ຫລື ການແນະນຳຂອງ ກຊສ;
3. ບໍລິສັດ ຕ້ອງຮັບປະກັນວ່າ ແຜນການບູລະນະຟື້ນຟູ ຕ້ອງໄດ້ຮັບການຈັດຕັ້ງປະຕິບັດ ຢ່າງເຕັມສ່ວນ ໃນທຸກດ້ານ ຂອງແຜນການບູລະນະຟື້ນຟູ ໂດຍປະຕິບັດໃຫ້ສຳເລັດ ກ່ອນການມອບຮັບໂຄງການ ໃຫ້ແກ່ລັດຖະບານ ຄື ບໍ່ໃຫ້ເກີນກວ່າ 6 (ຫົກ) ເດືອນ ກ່ອນສິ້ນສຸດໄລຍະສັນຍາສຳປະທານໂຄງການ;
4. ບໍລິສັດ ຕ້ອງສ້າງຕັ້ງກອງທຶນບູລະນະຟື້ນຟູ ທີ່ຄຸ້ມຄອງ ໂດຍບໍລິສັດເອງ ຈາກວັນທີ່ແຜນການບູລະນະຟື້ນຟູໄດ້ຜ່ານຮັບການຮັບຮອງ ແລະ ຖ້າຫາກງົບປະມານ ບໍ່ພຽງພໍ ບໍລິສັດຕ້ອງໄດ້ສະໜອງເພີ່ມເຕີມ ເພື່ອຮັບປະກັນຕໍ່ຜົນສຳເລັດ ການຈັດຕັ້ງປະຕິບັດທຸກກິດຈະກຳ ທີ່ແຜນການໄດ້ກຳນົດໄວ້;
5. ໃນກໍລະນີ ສັນຍາສຳປະທານໄດ້ຖືກຍົກເລີກກ່ອນ ດ້ວຍເຫດຜົນໃດໜຶ່ງ, ບໍລິສັດ ຕ້ອງສືບຕໍ່ຮັບຜິດຊອບຢ່າງເຕັມສ່ວນ ສຳລັບຄ່າໃຊ້ຈ່າຍ ທັງໃຫ້ທ່ວງທັນກັບເວລາ ແລະ ພຽງພໍ ໃນການບູລະນະຟື້ນຟູ ພື້ນທີ່ ໄດ້ຮັບຜົນກະທົບຈາກໂຄງການ ຕາມທີ່ ກຊສ ໄດ້ແນະນຳ.

## ພາກທີ III ການທົດແທນຄ່າເສຍຫາຍ

ການທົດແທນຄ່າເສຍຫາຍ ທີ່ໄດ້ຮັບຜົນກະທົບຈາກໂຄງການ, ບໍລິສັດ ມີພັນທະປະຕິບັດໃຫ້ຖືກຕ້ອງ ແລະ ສອດຄ່ອງກັບບົດບັນຍັດທັງໝົດທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍສະບັບນີ້, ກົດໝາຍ ແລະ ລະບຽບການຕ່າງໆທີ່ກ່ຽວຂ້ອງ ຂອງ ສປປ ລາວ ໂດຍສະເພາະ ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍ ການທົດແທນຄ່າເສຍຫາຍ ແລະການຈັດສັນຍົກຍ້າຍປະຊາຊົນ ຈາກໂຄງການພັດທະນາ ສະບັບເລກທີ ......, ລົງວັນທີ......... ແລະ ບົດແນະນຳທາງດ້ານວິຊາການທີ່ກ່ຽວຂ້ອງ.

ຢ່າງໃດກໍຕາມ, ບໍລິສັດ ຕ້ອງເອົາໃຈໃສ່ ຈັດຕັ້ງປະຕິບັດ ດັ່ງລຸ່ມນີ້ :

## 16. ການສ້າງ ແຜນການລະອຽດການທົດແທນຄ່າເສຍຫາຍ

1. ໃນໄລຍະ 12 (ສິບສອງ) ເດືອນລົງມາ ຫລັງຈາກເຊັນສັນຍາສຳປະທານໂຄງການ, ບໍລິສັດ ຕ້ອງປະສານສົມທົບກັບ ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ໃນແຕ່ລະຂັ້ນ ປະຈຳທ້ອງຖິ່ນທີ່ກ່ຽວຂ້ອງ ເກັບກຳຂໍ້ມູນກ່ຽວກັບ ຜູ່ໄດ້ຮັບຜົນກະທົບ ລວມທັງ ລາຍການທົດແທນຄ່າເສຍຫາຍຢ່າງລະອຽດ ເພື່ອສ້າງ ແລະ ນຳສົ່ງ ແຜນການລະອຽດການທົດແທນຄ່າເສຍຫາຍ ໃຫ້ແກ່ ຄະນະກຳມະການຄຸ້ມຄອງການທົດແທນຄ່າເສຍຫາຍ ແຂວງ, ນະຄອນ ພິຈາລະນາ ຮັບຮອງ ໂດຍແຜນດັ່ງກ່າວ ຕ້ອງສອດຄ່ອງກັບແຜນການລວມການທົດແທນຄ່າເສຍຫາຍ ທີ່ກຳນົດໄວ້ໃນ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະທຳມະຊາດ ທີ່ ກຊສ ໄດ້ຮັບຮອງ;
2. ວັນເວລາ ທີ່ ຄະນະກຳມະການຄຸ້ມຄອງການທົດແທນຄ່າເສຍຫາຍ ແຂວງ, ນະຄອນ ອອກຂໍ້ຕົກລົງຮັບຮອງເອົາ ແຜນການລະອຽດການທົດແທນຄ່າເສຍຫາຍນັ້ນ ຖືເປັນ ວັນຂຶ້ນທະບຽນສິດຂອງຜູ້ໄດ້ຮັບຜົນກະທົບ.

## 17. ການປະຕິບັດ ການທົດແທນຄ່າເສຍຫາຍ

ບໍລິສັດ ຕ້ອງປະຕິບັດການທົດແທນຄ່າເສຍຫາຍຢ່າງຖືກຕ້ອງ ແລະ ສອດຄ່ອງກັບຫລັກການສຳຄັນດັ່ງລຸ່ມນີ້:

1. ໃນກໍລະນີ ຜູ້ໄດ້ຮັບຜົນກະທົບ ມີເອກະສານກ່ຽວກັບສິດນຳໃຊ້ທີ່ດິນ ຢ່າງຖືກຕ້ອງຕາມກົດໝາຍ ສູນເສຍທີ່ດິນທັງໝົດ ຫລື ສ່ວນໃຫຍ່, ສ່ວນທີ່ດິນທີ່ຍັງເຫລືອ ບໍ່ສາມາດນຳໃຊ້ໄດ້ອີກ, ບໍລິສັດ ຕ້ອງໄດ້ທົດແທນຄ່າເສຍຫາຍທັງໝົດ ໂດຍຈັດສັນທີ່ດິນບ່ອນໃໝ່ທົດແທນ ດ້ວຍມູນຄ່າປ່ຽນແທນ ແລະ ໃຫ້ໄດ້ຮັບເອກະສານ ກ່ຽວກັບ ສິດນຳໃຊ້ທີ່ດິນຕອນນັ້ນ ພ້ອມທັງຮັບຜິດຊອບ ຄ່າໃຊ້ຈ່າຍຕ່າງໆ ເພື່ອໃຫ້ໄດ້ຮັບເອກະສານດັ່ງກ່າວ. ໃນກໍລະນີ ບໍ່ສາມາດຊອກຫາທີ່ດິນທີ່ເໝາະສົມ ທົດແທນໃຫ້ ຫລື ດິນນັ້ນ ມີຂະໜາດນ້ອຍກວ່າ ທີ່ຜູ້ໄດ້ຮັບຜົນກະທົບສູນເສຍ, ບໍລິສັດ ຕ້ອງໄດ້ທົດແທນຄ່າເສຍຫາຍ ດ້ວຍມູນຄ່າປ່ຽນແທນ;
2. ໃນກໍລະນີ ຜູ້ໄດ້ຮັບຜົນກະທົບ ມີເອກະສານກ່ຽວກັບສິດນຳໃຊ້ທີ່ດິນ ຢ່າງຖືກຕ້ອງຕາມກົດໝາຍ ສູນເສຍທີ່ດິນ ພຽງສ່ວນໜຶ່ງ ແລະ ທີ່ດິນທີ່ຍັງເຫລືອ ສາມາດນຳໃຊ້ໄດ້ຢູ່, ບໍລິສັດ ຕ້ອງໄດ້ທົດແທນ ຄ່າເສຍຫາຍໃນສ່ວນທີ່ໄດ້ສູນເສຍນັ້ນ ດ້ວຍ ມູນຄ່າປ່ຽນແທນ, ສ່ວນທີ່ດິນທີ່ຍັງເຫລືອ ຕ້ອງໃຫ້ ຜູ້ໄດ້ຮັບຜົນກະທົບໄດ້ຮັບເອກະສານກ່ຽວກັບສິດນຳໃຊ້ທີ່ດິນຕອນນັ້ນ ໂດຍບໍລິສັດຕ້ອງເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆ;
3. ໃນກໍລະນີ ຜູ້ໄດ້ຮັບຜົນກະທົບ ມີສິດນຳໃຊ້ທີ່ດິນຕາມປະເພນີ ສູນເສຍສິດກ່ຽວກັບ ການຄອບຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນ ດ້ວຍຄວາມສະຫງົບ, ຕໍ່ເນື່ອງ ແລະ ຍາວນານ ໂດຍບໍ່ໄດ້ບຸກລຸກທີ່ດິນເຂດສະຫງວນ ຫລື ເຂດຫວງຫ້າມຂອງລັດ ພ້ອມທັງ ໄດ້ຮັບການພິຈາລະນາຢັ້ງຢືນ ໂດຍ

ຄະນະກຳມະການຄຸ້ມຄອງການທົດແທນຄ່າເສຍຫາຍ ແຂວງ, ນະຄອນ, ບໍລິສັດ ຕ້ອງທົດແທນຄ່າເສຍຫາຍ ບົນພື້ນຖານຫລັກການອັນດຽວກັນກັບຫລັກການ ທີ່ກຳນົດໄວ້ໃນຂໍ້ 1 ຂ້າງເທິງນີ້;

4. ໃນກໍລະນີ ການສູນເສຍສິ່ງປຸກສ້າງ ທັງໝົດ ຫລື ບາງສ່ວນ, ບໍລິສັດ ຕ້ອງໄດ້ທົດແທນຄ່າເສຍຫາຍ ດ້ວຍມູນຄ່າປ່ຽນແທນ ຂອງສິ່ງປຸກສ້າງດັ່ງກ່າວ ໃຫ້ແກ່ຜູ່ໄດ້ຮັບຜົນກະທົບ ທີ່ເປັນເຈົ້າກຳມະສິດສິ່ງປຸກສ້າງນັ້ນ ໂດຍບໍ່ມີການຫັກຄ່າຫລຸ້ຍຫ້ຽນ ຫລື ບໍ່ມີການຫລຸດຄ່າທົດແທນ ສຳລັບວັດຖຸກໍ່ສ້າງ ທີ່ຍັງເຫລືອ;

5. ໃນກໍລະນີ ທີ່ດິນ ຫລື ສິ່ງປຸກສ້າງ ໄດ້ຢຸດການນຳໃຊ້ຊົ່ວຄາວ, ບໍລິສັດ ຕ້ອງໄດ້ທົດແທນຄ່າເສຍຫາຍ ໃຫ້ແກ່ຜູ້ໄດ້ຮັບຜົນກະທົບ ທີ່ເປັນເຈົ້າກຳມະສິດທີ່ດິນ ຫລືສິ່ງປຸກສ້າງນັ້ນ ພ້ອມທັງ ສົ່ງຄືນທີ່ດິນ ຫລືສິ່ງປຸກສ້າງ ໃຫ້ແກ່ ຜູ້ໄດ້ຮັບຜົນກະທົບ ໃນສະພາບເດີມ;

6. ໃນກໍລະນີ ການສູນເສຍຕົ້ນໄມ້, ພືນລະປູກ, ສັດລ້ຽງ ຫລືລາຍຮັບ ບໍລິສັດ ຕ້ອງທົດແທນຄ່າເສຍຫາຍ ດ້ວຍ ມູນຄ່າປ່ຽນແທນ;

7. ໃນກໍລະນີ ການສູນເສຍໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກຕ່າງໆແກ່ຊຸມຊົນ, ບໍລິສັດ ຕ້ອງໄດ້ປັວແປງໂຄງລ່າງພື້ນຖານ ແລະສິ່ງອຳນວຍຄວາມສະດວກຕ່າງໆເຫລົ່ານັ້ນ ໃຫ້ຢູ່ໃນສະພາບຄ້າຍຄືເກົ່າ, ແຕ່ຕ້ອງເອົາໃຈໃສ່ເປັນພິເສດ ຖ້າເປັນການສູນເສຍໂຄງລ່າງພື້ນຖານ ທາງດ້ານວັດທະນະທຳ, ສາດສະໜາ ແລະ ຮີດຄອງປະເພນີທ້ອງຖິ່ນ;

8. ການທົດແທນຄ່າເສຍຫາຍ ໃຫ້ແກ່ ຜູ້ໄດ້ຮັບຜົນກະທົບ ໃນທຸກກໍລະນີ, ບໍລິສັດ ຕ້ອງໄດ້ປະສານສົມທົບກັບ ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ປະຈຳທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອ ຕິດຕາມກວດກາ ແລະ ຢັ້ງຢືນ ຄວາມຖືກຕ້ອງ ແລະ ຄົບຖ້ວນ ຕາມແຜນການລະອຽດການທົດແທນຄ່າເສຍຫາຍ;

9. ບໍລິສັດ ຕ້ອງປະຕິບັດແຜນການລະອຽດການທົດແທນຄ່າເສຍຫາຍ ໃຫ້ສຳເລັດພາຍໃນ 36 (ສາມສິບຫົກ) ເດືອນ ນັບຕັ້ງແຕ່ວັນເວລາແຜນດັ່ງກ່າວ ໄດ້ຖືກຮັບຮອງເອົາຢ່າງເປັນທາງການ. ຖ້າບໍລິສັດ ຫາກບໍ່ສຳເລັດການທົດແທນຄ່າເສຍຫາຍພາຍໃນໄລຍະເວລາທີ່ກຳນົດໄວ້, ບໍລິສັດ ຕ້ອງສະເໜີ ຄະນະກຳມະການຄຸ້ມຄອງການທົດແທນຄ່າເສຍຫາຍ ແຂວງ, ນະຄອນ ພິຈາລະນາຂະຫຍາຍໄລຍະເວລາເພີ່ມຕື່ມ ເພື່ອປະຕິບັດການທົດແທນຄ່າເສຍຫາຍໃຫ້ສຳເລັດ;

10. ໃນກໍລະນີ ຜ່ານການປະເມີນຕີລາຄາ ຂອງ ຄະນະກຳມະການຄຸ້ມຄອງການທົດແທນຄ່າເສຍຫາຍ ແຂວງ, ນະຄອນ ພົບວ່າ ການປະຕິບັດແຜນການລະອຽດການທົດແທນຄ່າເສຍຫາຍ ບໍ່ມີຄວາມຄືບໜ້າ ພາຍໃນ 12 (ສິບສອງ) ເດືອນ ພາຍຫລັງ ວັນຂຶ້ນທະບຽນສິດຂອງຜູ້ໄດ້ຮັບຜົນກະທົບແລ້ວ, ແຜນການດັ່ງກ່າວນັ້ນ ຈະຖືກຍົກເລີກ. ສຳລັບການທົດແທນຄ່າເສຍຫາຍ ຕໍ່ທີ່ດິນ, ສິ່ງປຸກສ້າງ, ພືນລະປູກ, ສັດລ້ຽງ ແລະ ລາຍຮັບ ທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາຂອງຕົນທີ່ຍັງຄົງຄ້າງຢູ່ນັ້ນ, ບໍລິສັດ ຕອ້ງໄດ້ສືບຕໍ່ດຳເນີນການໃຫ້ສຳເລັດ. ໃນກໍລະນີ ບໍລິສັດ ຕ້ອງການສືບຕໍ່ປະຕິບັດແຜນການລະອຽດການທົດແທນຄ່າເສຍຫາຍ ຕ້ອງໄດ້ປັບປຸງແຜນການດັ່ງກ່າວນັ້ນ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບສະພາບຄວາມເປັນຈິງ ແລ້ວນຳສະເໜີ ຄະນະກຳມະການຄຸ້ມຄອງການທົດແທນຄ່າເສຍຫາຍ ແຂວງ, ນະຄອນ ພິຈາລະນາຮັບຮອງ ຄືນໃໝ່.

## 18. ການຕີລາຄາ ແລະ ປະເມີນ ມູນຄ່າປ່ຽນແທນ

ບໍລິສັດ ໂດຍປະສານສົມທົບກັບ ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ປະຈຳທ້ອງຖິ່ນທີ່ກ່ຽວຂ້ອງ ຕ້ອງດຳເນີນການຕີລາຄາ ແລະ ປະເມີນມູນຄ່າປ່ຽນແທນ ສຳລັບ ທີ່ດິນ, ສິ່ງປຸກສ້າງ, ພືນລະປູກ, ສັດລ້ຽງ ແລະ ລາຍຮັບ ທີ່ຕ້ອງໄດ້ຮັບການທົດແທນຄ່າເສຍຫາຍ ພ້ອມທັງ ປຶກສາຫາລື ເປັນເອກະພາບ ກັບຜູ້ໄດ້ຮັບຜົນກະທົບ ໂດຍກຳນົດເອົາທາງເລືອກທີ່ຖືກຕ້ອງ ແລະເໝາະສົມ ບົນພື້ນຖານ ການປະເມີນ (ລາຄາ

ຂອງລັດ, ລາຄາການຊື້-ຂາຍໃນທ້ອງຕະຫລາດ ຫລື ເປັນລາຄາສະເລ່ຍໃນໄລຍະເວລານັ້ນ) ຂອງແຕ່ລະເຂດ, ແຕ່ລະປະເພດ ແລະ ແຕ່ລະທ້ອງຖິ່ນ.

## 19. ສິດ ຂອງ ຜູ້ໄດ້ຮັບຜົນກະທົບ

ໃນການທົດແທນຄ່າເສຍຫາຍ ບໍລິສັດຕ້ອງ ໃຫ້ສິດ ແກ່ຜູ້ໄດ້ຮັບຜົນກະທົບ ຄື: ໄດ້ຮັບຂໍ້ມູນຂ່າວສານ, ເຂົ້າຮ່ວມກອງປະຊຸມປຶກສາຫາລືໃນລະດັບຕ່າງໆ, ໄດ້ຮັບການທົດແທນຄ່າເສຍຫາຍ, ສະເໜີ ແລະ ເຂົ້າຮ່ວມ ຈັດຕັ້ງປະຕິບັດແຜນການລະອຽດ ການທົດແທນຄ່າເສຍຫາຍ. ສຳລັບເນື້ອໃນລະອຽດ ກ່ຽວກັບ ສິດ ຂອງຜູ້ໄດ້ຮັບຜົນກະທົບ ແມ່ນໄດ້ຊີ້ແຈງໃນເອກະສານຄັດຕິດ 7.

## 20. ຄະນະຮັບຜິດຊອບ ການທົດແທນຄ່າເສຍຫາຍ

ຄະນະຮັບຜິດຊອບ ການທົດແທນຄ່າເສຍຫາຍ ປະກອບດ້ວຍ: ຄະນະກຳມະການຄຸ້ມຄອງການທົດແທນຄ່າເສຍຫາຍ ແຂວງ, ນະຄອນ; ໜ່ວຍງານຄຸ້ມຄອງການທົດແທນຄ່າເສຍຫາຍ ແຂວງ, ນະຄອນ ແລະ ໜ່ວຍປະຕິບັດການທົດແທນຄ່າເສຍຫາຍ ເມືອງ, ເທດສະບານ. ການສ້າງຕັ້ງ, ໂຄງປະກອບ, ສິດ ແລະໜ້າທີ່ຂອງແຕ່ລະໜ່ວຍງານ ແມ່ນຊີ້ແຈງໃນ ເອກະສານຄັດຕິດ 8.

## 21. ການແກ້ໄຂຂໍ້ສະເໜີ ຂອງຜູ້ໄດ້ຮັບຜົນກະທົບ ກ່ຽວກັບການທົດແທນຄ່າເສຍຫາຍ

ຜູ້ໄດ້ຮັບຜົນກະທົບ ເຫັນວ່າ ບໍລິສັດ ບໍ່ປະຕິບັດຕາມແຜນການລະອຽດ ການທົດແທນຄ່າເສຍຫາຍ, ຕາມທີ່ໄດ້ບັນຍັດໄວ້ໃນ ເອກະສານຊ້ອນທ້າຍສະບັບນີ້, ກົດໝາຍ ແລະ ລະບຽບການ ຫລື ແຜນການທີ່ກ່ຽວຂ້ອງ ຊຶ່ງແຕະຕ້ອງເຖິງຜົນປະໂຫຍດຂອງຕົນ, ຜູ້ໄດ້ຮັບຜົນກະທົບນັ້ນ ມີສິດຍື່ນຂໍ້ສະເໜີຂອງຕົນ ຕໍ່ພາກສ່ວນທີ່ກ່ຽວຂ້ອງ ເພື່ອພິຈາລະນາແກ້ໄຂ ໄປຕາມຂັ້ນຕອນ ຊຶ່ງລາຍລະອຽດ ກ່ຽວກັບຂັ້ນຕອນ ການແກ້ໄຂຂໍ້ສະເໜີຂອງຜູ້ໄດ້ຮັບຜົນກະທົບ ແມ່ນໄດ້ຊີ້ແຈງໃນເອກະສານຄັດຕິດ 9.

ເອກະສານຄັດຕິດ 1  ການອະທິບາຍຄຳສັບ

1. **ບໍລິສັດ** ໝາຍເຖິງ ເຈົ້າຂອງໂຄງການ ທີ່ເປັນບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງໃດໜຶ່ງ ທີ່ໄດ້ຮັບອະນຸຍາດໃຫ້ສຶກສາ, ສຳຫລວດ, ອອກແບບ, ກໍ່ສ້າງ ແລະ ດຳເນີນ ໂຄງການພັດທະນາ;
3. **ລັດຖະບານ** ໝາຍເຖິງ ລັດຖະບານ ສປປ ລາວ ກໍຄື ຂະແໜງການທີ່ກ່ຽວຂ້ອງ ທີ່ຕາງໜ້າໃຫ້ລັດຖະບານ;
4. **ຄຳແນະນຳ ເລກທີ** 8030/**ກຊສ** ໝາຍເຖິງ ຄຳແນະນຳຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະທຳມະຊາດ ຈາກໂຄງການລົງທຶນ ແລະກິດຈະການຕ່າງໆ ສະບັບເລກທີ 8030/ກຊສ, ລົງວັນທີ 17 ທັນວາ 2013;
5. **ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ** ໝາຍເຖິງ ຜົນສະທ້ອນທາງລົບຕໍ່ຊີວິດ, ສຸຂະພາບ, ຊັບສິນ ແລະ ການດຳລົງຊີວິດປະຈຳວັນຂອງຄົນ ລວມທັງ ທີ່ຢູ່ອາໄສຂອງປະຊາຊົນ ແລະ ຕໍ່ມໍລະດົກທາງດ້ານວັດທະນະທຳ ແລະ ປະຫວັດສາດ;
6. **ຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ** ໝາຍເຖິງ ຜົນສະທ້ອນທາງລົບຕໍ່ພື້ນຖານລະບົບນິເວດທຳມະຊາດ, ຊັບພະຍາກອນທຳມະຊາດ, ຊີວະນາໆພັນ, ດິນປູກຝັງ, ແຫລ່ງນ້ຳ ແລະ ການປ່ຽນແປງດິນຟ້າອາກາດ ລວມທັງ ມໍລະດົກທາງດ້ານທຳມະຊາດ;
7. **ການມີສ່ວນຮ່ວມຂອງມວນຊົນ** ໝາຍເຖິງ ຂະບວນການປຶກສາຫາລື, ໂຄສະນາເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບ ໂຄງການພັດທະນາ ເພື່ອນຳເອົາຄວາມຄິດຄວາມເຫັນ ຈາກພາກສ່ວນທີ່ຄາດວ່າຈະໄດ້ຮັບຜົນກະທົບ ຫລື ໄດ້ຮັບຜົນປະໂຫຍດ ກໍຄື ຈາກພາກສ່ວນທີ່ມີຄວາມສົນໃຈ ຕໍ່ໂຄງການພັດທະນາ ມາເປັນບ່ອນອີງໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະທຳມະຊາດ;
8. **ຜູ້ໄດ້ຮັບຜົນກະທົບ** ໝາຍເຖິງ ຫມາຍເຖິງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ໄດ້ຮັບຜົນກະທົບທາງລົບຈາກ ໂຄງການພັດທະນາ ບໍ່ວ່າແບບຖາວອນ ຫລື ແບບຊົ່ວຄາວ ຊຶ່ງໄດ້ຮັບການຂຶ້ນທະບຽນໄວ້ ໃນວັນຂຶ້ນທະ ບຽນສິດຂອງຜູ້ໄດ້ຮັບຜົນກະທົບ.;
9. **ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ (ບປຜສ)** ຫມາຍເຖິງ ບໍລິສັດໄດ້ວ່າຈ້າງບໍລິສັດທີ່ປຶກສາສິ່ງແວດລ້ອມໃດໜຶ່ງ ສ້າງ ບປຜສ ສຳລັບໂຄງການພັດທະນາຂອງຕົນ ໂດຍຜ່ານຂະບວນການສຶກສາ, ສຳຫລວດ, ວິໄຈຂໍ້ມູນ ແລະ ຄາດຄະເນ ຜົນສະທ້ອນທາງດ້ານບວກ ແລະ ດ້ານລົບ ຕໍ່ ສິ່ງແວດລ້ອມສັງຄົມ ແລະ ສິ່ງແວດລ້ອມທຳມະຊາດ ລວມທັງ ບັນຫາທີ່ພົວພັນກັບ ຜົນກະທົບຂອງການປ່ຽນແປງດິນຟ້າອາກາດ ທີ່ຈະເກີດຂຶ້ນຢ່າງຮຸນແຮງ ຈາກໂຄງການພັດທະນາ ທັງໃນໄລຍະສັ້ນ ແລະ ໄລຍະຍາວ ພ້ອມທັງ ກຳນົດວິທີການ ແລະມາດຕະການທີ່ເໝາະສົມ ເພື່ອປ້ອງກັນ, ຫລີກເວັ້ນ ແລະ ຫລຸດຜ່ອນບັນດາຜົນກະທົບ ທີ່ໄດ້ຈາກການປະເມີນ;
10. **ແຜນການຄຸ້ມຄອງ ແລະຕິດຕາມກວດກາ ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ (ຜຄຕສ)** ໝາຍເຖິງ ແຜນການທີ່ໄດ້ສັງລວມເອົາບັນດາໜ້າວຽກຕົ້ນຕໍ ດ້ານສິ່ງແວດລ້ອມສັງຄົມ ແລະສິ່ງແວດລ້ອມທຳມະຊາດ ທີ່ໄດ້ສັງລວມເອົາ ບັນດາມາດຕະການຕົ້ນຕໍ ໃນການປ້ອງກັນ, ຫລຸດຜ່ອນ ແລະ ແກ້ໄຂຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ທີ່ໄດ້ສຶກສາໄວ້ໃນ ບປຜສ ພ້ອມທັງກຳ

ນິດການຈັດຕັ້ງ, ຄວາມຮັບຜິດຊອບ, ຕາຕະລາງເວລາ ແລະງົບປະມານໃຫ້ພຽງພໍ ເພື່ອການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ;

11. **ແຜນການລະອຽດການທົດແທນຄ່າເສຍຫາຍ** ໝາຍເຖິງ ແຜນປະຕິບັດງານລະອຽດ ກ່ຽວກັບ ການດຳເນີນການທົດແທນຄ່າເສຍຫາຍ ທີ່ເຈົ້າຂອງໂຄງການຕ້ອງສ້າງຂຶ້ນ ໂດຍໃຫ້ຖືກຕ້ອງ ແລະສອດຄ່ອງກັບແຜນການຄຸ້ມຄອງ ແລະຕິດຕາມກວດກາສິ່ງແວດລ້ອມສັງຄົມ ທີ່ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ) ໄດ້ຮັບຮອງເອົາແລ້ວ;

12. **ວັນຂຶ້ນທະບຽນສິດຂອງຜູ້ໄດ້ຮັບຜົນກະທົບ** ໝາຍເຖິງ ວັນທີເດືອນປີ ທີ່ ຄະນະກຳມະການຄຸ້ມຄອງການທົດແທນຄ່າເສຍຫາຍ ແຂວງ, ນະຄອນ ອອກຂໍ້ຕົກລົງຮັບຮອງເອົາ ແຜນການລະອຽດການທົດແທນຄ່າເສຍຫາຍ;

13. **ມູນຄ່າປ່ຽນແທນ** ຫມາຍເຖິງ ມູນຄ່າທີ່ຄິດໄລ່ເປັນ ວັດຖຸ, ເງິນ ຫລື ທີ່ດິນ ທີ່ຈຳເປັນຕ້ອງນຳໃຊ້ ເພື່ອປ່ຽນແທນ ທີ່ດິນ, ສິ່ງປຸກສ້າງ, ສັດລ້ຽງ, ຜົນລະປູກ ແລະລາຍຮັບທີ່ໄດ້ຮັບຜົນກະທົບ ຈາກ ໂຄງການພັດທະນາ;

## ເອກະສານຄັດຕິດ 2 ກົດໝາຍ, ລະບຽບການ ແລະ ມາດຕະຖານທີ່ກ່ຽວຂ້ອງ ຂອງ ສປປ ລາວ ແລະ ສາກົນ

### 1. ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ

- ລັດຖະທຳມະນູນແຫ່ງ ສປປ ລາວ ສະບັບທຳອິດ ທີ່ປະກາດໃຊ້ໃນວັນທີ 15 ສິງຫາ 1991 ແລະ ຕໍ່ມາ ລັດຖະທຳມະນູນ ສະບັບດັ່ງກ່າວ ໄດ້ຮັບການປັບປຸງ ແລະ ປະກາດໃຊ້ໃນວັນທີ 28 ພຶດສະພາ 2003;
- ກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 02/ສພຊ, ລົງວັນທີ 8 ກໍລະກົດ 2009;
- ກົດໝາຍ ວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບປັບປຸງ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;
- ກົດໝາຍ ວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ສະບັບເລກທີ 02-96/ສພຊ, ລົງວັນທີ 11 ຕຸລາ 1996;
- ກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007;
- ກົດໝາຍ ວ່າດ້ວຍ ສັດນ້ຳ ແລະ ສັດປ່າ ສະບັບເລກທີ 07/ສພຊ, ລົງວັນທີ 24 ທັນວາ 2007;
- ກົດໝາຍ ວ່າດ້ວຍທີ່ດິນ ສະບັບເລກທີ 02/ສພຊ, ລົງວັນທີ 21 ຕຸລາ 2003;
- ດຳລັດ ວ່າດ້ວຍການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 88/ນຍ, ລົງວັນທີ 3 ມິຖຸນາ 2008;
- ດຳລັດ ວ່າດ້ວຍການໃຫ້ເຊົ່າ ຫລື ສຳປະທານດິນລັດ ສະບັບເລກທີ 135/ນຍ, ລົງວັນທີ 25 ພຶດສະພາ 2009;
- ລັດຖະບັນຍັດປະທານປະເທດ ວ່າດ້ວຍອັດຕາຄ່າເຊົ່າ ແລະ ສຳປະທານດິນລັດ ສະບັບເລກທີ 02/ປປທ, ລົງວັນທີ 18 ພະຈິກ 2009;
- ດຳລັດ ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນຈາກໂຄງການພັດທະນາ ສະບັບເລກທີ ............., ລົງວັນທີ ........;
- ຄຳແນະນຳຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະທຳມະຊາດ ຈາກໂຄງການລົງທຶນ ແລະກິດຈະການຕ່າງໆ ສະບັບເລກທີ 8030/ກຊສ, ລົງວັນທີ 17 ທັນວາ 2013;
- ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງມາດຕະຖານຄຸນນະພາບນ້ຳດື່ມ ແລະ ນ້ຳປະປາ ພາຍໃນຫລັງຄາເຮືອນ ສະບັບເລກທີ 1371/ກສທ, ລົງວັນທີ 4 ຕຸລາ 2005;
- ຂໍ້ຕົກລົງ ວ່າດ້ວຍມາດຕະຖານສິ່ງແວດລ້ອມແຫ່ງຊາດ ສະບັບເລກທີ 2734/ສນຍ.ອຊນສ, ລົງວັນທີ 7 ທັນວາ 2009.

### 2. ປຶ້ມແນະນຳ ດ້ານວິຊາການ

- ປຶ້ມແນະນຳ ກ່ຽວກັບ ການດຳເນີນງານດ້ານສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ສຳລັບຂະແໜງເສັ້ນທາງ, ກະຊວງໂຍທາທິການ ແລະ ຂົນສົ່ງ, ມີນາ 2009;
- ປຶ້ມແນະນຳວ່າດ້ວຍການມີສ່ວນຮ່ວມຂອງມວນຊົນ ສະບັບເລກທີ 707/ກຊສ, ລົງວັນທີ 05 ກຸມພາ 2013;

- ບົດແນະນຳດ້ານວິຊາການ ກ່ຽວກັບ ການປະເມີນຜົນກະທົບຕໍ່ສຸຂະພາບ, ກະຊວງສາທາລະນະສຸກ, 2010.

## 3. ມາດຕະຖານ

### 3.1 ມາດຕະຖານແຫ່ງຊາດ

- ມາດຕະຖານຄຸນນະພາບນ້ຳ;
- ມາດຕະຖານຄຸນນະພາບອາກາດ;
- ມາດຕະຖານຄຸນນະພາບສຽງ;
- ອື່ນໆ.

### 3.2 ມາດຕະຖານສາກົນ

**1. ມາດຕະຖານ ການຈັດຕັ້ງປະຕິບັດ ຂອງອົງການການເງິນສາກົນ (IFC)**

- ມາດຕະຖານ ການຈັດຕັ້ງປະຕິບັດ 1: ບັນດາ ລະບົບການຄຸ້ມຄອງ ແລະການປະເມີນຜົນ ດ້ານສິ່ງແວດລ້ອມສັງຄົມ ແລະທຳມະຊາດ;
- ມາດຕະຖານ ການຈັດຕັ້ງປະຕິບັດ 2: ກຳມະກອນ ແລະ ເງື່ອນໄຂການເຮັດວຽກ;
- ມາດຕະຖານ ການຈັດຕັ້ງປະຕິບັດ 3: ການປ້ອງກັນ ແລະ ຫລຸດຜ່ອນ ມົນລະພິດ;
- ມາດຕະຖານ ການຈັດຕັ້ງປະຕິບັດ 4: ສຸຂະພາບຊຸມຊົນ, ຄວາມປອດໄພ ແລະ ຄວາມສະຫງົບ;
- ມາດຕະຖານການ ຈັດຕັ້ງປະຕິບັດ 5: ການເວນຄືນທີ່ດິນ ແລະການຈັດສັນຍົກຍ້າຍປະຊາຊົນ;
- ມາດຕະຖານ ການຈັດຕັ້ງປະຕິບັດ 6: ການສະຫງວນຊີວະນາໆພັນ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດ ແບບຍືນຍົງ;
- ມາດຕະຖານການຈັດຕັ້ງປະຕິບັດ 7: ກຸ່ມຄົນທີ່ບໍ່ສາມາດຊ່ວຍເຫລືອຕົນເອງໄດ້;
- ມາດຕະຖານ ການຈັດຕັ້ງປະຕິບັດ 8: ມໍລະດົກທາງດ້ານວັດທະນະທຳ.

*2.* ບັນດາ ບົດແນະນຳດ້ານວິຊາການ ຂອງ ອົງການການເງິນສາກົນ (*IFC*)ກ່ຽວກັບ ຄຸນນະພາບສິ່ງແວດລ້ອມ ແລະ ຄວາມປອດໄພ

- ບົດແນະນຳດ້ານວິຊາການ ຂອງອົງການການເງິນສາກົນ (IFC) ກ່ຽວກັບ ຄຸນນະພາບສິ່ງແວດລ້ອມ ແລະ ຄວາມປອດໄພ: ບົດແນະນຳດ້ານຄຸນນະພາບສິ່ງແວດລ້ອມ ແລະ ຄວາມປອດໄພທົ່ວໄປ, ມົນລະພິດທາງອາກາດ ແລະ ຄຸນນະພາບອາກາດ, 30 ເມສາ, 2007;
- ບົດແນະນຳດ້ານວິຊາການ ຂອງ ອົງການການເງິນສາກົນ (IFC) ກ່ຽວກັບ ຄຸນນະພາບສິ່ງແວດລ້ອມ ແລະ ຄວາມປອດໄພ: ບົດແນະນຳດ້ານຄຸນນະພາບສິ່ງແວດລ້ອມ ແລະ ຄວາມປອດໄພທົ່ວໄປ, ນ້ຳເສດເຫລືອ ແລະ ຄຸນນະພາບນ້ຳ, 30 ເມສາ, 2007;
- ບົດແນະນຳດ້ານວິຊາການ ຂອງ ອົງການການເງິນສາກົນ (IFC) ກ່ຽວກັບ ຄຸນນະພາບສິ່ງແວດລ້ອມ ແລະ ຄວາມປອດໄພ: ບົດແນະນຳດ້ານຄຸນນະພາບສິ່ງແວດລ້ອມ ແລະ ຄວາມປອດໄພທົ່ວໄປ, ການຄຸ້ມຄອງວັດສະດຸອັນຕະລາຍ, 30 ເມສາ, 2007;

- ບົດແນະນຳດ້ານວິຊາການ ຂອງ ອົງການການເງິນສາກົນ (IFC) ກ່ຽວກັບ ຄຸນນະພາບສິ່ງແວດລ້ອມ ແລະ ຄວາມປອດໄພ: ບົດແນະນຳດ້ານຄຸນນະພາບສິ່ງແວດລ້ອມ ແລະ ຄວາມປອດໄພທົ່ວໄປ, ການຄຸ້ມຄອງສິ່ງເສດເຫລືອ, 30 ເມສາ, 2007;
- ບົດແນະນຳດ້ານວິຊາການ ຂອງ ອົງການການເງິນສາກົນ (IFC) ກ່ຽວກັບ ຄຸນນະພາບສິ່ງແວດລ້ອມ ແລະ ຄວາມປອດໄພ: ບົດແນະນຳດ້ານຄຸນນະພາບສິ່ງແວດລ້ອມ ແລະ ຄວາມປອດໄພທົ່ວໄປ, ການຄຸ້ມຄອງ ສຽງລົບກວນ, 30 ເມສາ, 2007;
- ບົດແນະນຳດ້ານວິຊາການ ຂອງ ອົງການການເງິນສາກົນ (IFC) ກ່ຽວກັບ ຄຸນນະພາບສິ່ງແວດລ້ອມ ແລະ ຄວາມປອດໄພ: ບົດແນະນຳດ້ານຄຸນນະພາບສິ່ງແວດລ້ອມ ແລະ ຄວາມປອດໄພທົ່ວໄປ, ດິນມີສານປົນເປື້ອນ, 30 ເມສາ, 2007;
- ບົດແນະນຳດ້ານວິຊາການ ຂອງ ອົງການການເງິນສາກົນ (IFC) ກ່ຽວກັບ ຄຸນນະພາບສິ່ງແວດລ້ອມ ແລະ ຄວາມປອດໄພ: ສາຍສົ່ງ ແລະ ການແຈກຢາຍໄຟຟ້າ, 30 ເມສາ, 2007;
- ບົດແນະນຳດ້ານວິຊາການ ຂອງ ອົງການການເງິນສາກົນ (IFC) ກ່ຽວກັບ ຄຸນນະພາບສິ່ງແວດລ້ອມ ແລະ ຄວາມປອດໄພ: ບົດແນະນຳດ້ານຄຸນນະພາບສິ່ງແວດລ້ອມ ແລະ ຄວາມປອດໄພທົ່ວໄປ, ການບໍລິການ ເກັບມ້ຽນສິ່ງເສດເຫລືອ, 10 ທັນວາ, 2007;
- ບົດແນະນຳດ້ານວິຊາການ ຂອງ ອົງການການເງິນສາກົນ (IFC) ກ່ຽວກັບ ຄຸນນະພາບສິ່ງແວດລ້ອມ ແລະ ຄວາມປອດໄພ: ບົດແນະນຳດ້ານຄຸນນະພາບສິ່ງແວດລ້ອມ ແລະ ຄວາມປອດໄພທົ່ວໄປ, ນ້ຳ ແລະ ສຸຂະອານາໄມ, 10 ທັນວາ, 2007;
- ບໄດແນະນຳດ້ານວິຊາການ ຂອງອົງການການເງິນສາກົນ (IFC) ກ່ຽວກັບ ຄຸນນະພາບສິ່ງແວດລ້ອມ ແລະ ຄວາມປອດໄພ: ບົດແນະນຳດ້ານຄຸນນະພາບສິ່ງແວດລ້ອມ ແລະ ຄວາມປອດໄພທົ່ວໄປ, ການຮັກສາພະລັງງານ, 30 ເມສາ, 2007;
- ບົດແນະນຳດ້ານວິຊາການ ຂອງ ອົງການການເງິນສາກົນ (IFC) ກ່ຽວກັບ ຄຸນນະພາບສິ່ງແວດລ້ອມ ແລະ ຄວາມປອດໄພ: ບົດແນະນຳດ້ານຄຸນນະພາບສິ່ງແວດລ້ອມ ແລະ ຄວາມປອດໄພທົ່ວໄປ, ການຮັກສານ້ຳ, 30 ເມສາ, 2007;
- ບົດແນະນຳດ້ານວິຊາການ ຂອງ ອົງການການເງິນສາກົນ (IFC) ກ່ຽວກັບ ຄຸນນະພາບສິ່ງແວດລ້ອມ ແລະ ຄວາມປອດໄພ: ບົດແນະນຳດ້ານຄຸນນະພາບສິ່ງແວດລ້ອມ ແລະ ຄວາມປອດໄພທົ່ວໄປ, ສຸຂະພາບ ແລະ ຄວາມປອດໄພ ຂອງຊຸມຊົນ, 30 ເມສາ, 2007;
- ບົດແນະນຳດ້ານວິຊາການ ຂອງອົງການການເງິນສາກົນ (IFC) ກ່ຽວກັບ ຄຸນນະພາບສິ່ງແວດລ້ອມ ແລະ ຄວາມປອດໄພ: ບົດແນະນຳດ້ານຄຸນນະພາບສິ່ງແວດລ້ອມ ແລະ ຄວາມປອດໄພທົ່ວໄປ, ການກໍ່ສ້າງ ແລະ ສິ້ນສຸດການກໍ່ສ້າງ, 30 ເມສາ, 2007;

- ບົດແນະນຳດ້ານວິຊາການ ຂອງອົງການການເງິນສາກົນ (IFC) ກ່ຽວກັບ ຄຸນນະພາບສິ່ງແວດລ້ອມ ແລະ ຄວາມປອດໄພ: ບົດແນະນຳດ້ານຄຸນນະພາບສິ່ງແວດລ້ອມ ແລະ ຄວາມປອດໄພທົ່ວໄປ, ທາງຫລວງ, 30 ເມສາ, 2007;
- ບົດແນະນຳດ້ານວິຊາການ ຂອງອົງການການເງິນສາກົນ (IFC) ກ່ຽວກັບ ຄຸນນະພາບສິ່ງແວດລ້ອມ ແລະ ຄວາມປອດໄພ: ບົດແນະນຳດ້ານຄຸນນະພາບສິ່ງແວດລ້ອມ ແລະ ຄວາມປອດໄພທົ່ວໄປ, ການຂຸດຄົ້ນວັດສະດຸກໍ່ສ້າງ, 30 ເມສາ, 2007;
- ຄູ່ມືຂອງອົງການການເງິນສາກົນ (IFC) ກ່ຽວກັບ ການສ້າງແຜນປະຕິບັດການຈັດສັນຍົກຍ້າຍປະຊາຊົນ, 2002.

**3. ບັນດາ ມາດຕະຖານຂອງ ທະນາຄານພັດທະນາອາຊີ (ADB) ທີ່ສາມາດນຳໃຊ້:**

- ນະໂຍບາຍການປົກປ້ອງ ຂອງທະນາຄານພັດທະນາອາຊີ (ADB) (ມີຖຸນາ 2009);
- ນະໂຍບາຍການສື່ສານກັບມວນຊົນ (ຕຸລາ 2011);
- ຍຸດທະສາດ ການປົກປັກຮັກສາສິ່ງແວດລ້ອມສັງຄົມ ( 2001).

**4. ບົດແນະນຳດ້ານວິຊາການ ແລະ ມາດຕະຖານອື່ນໆ ຂອງສາກົນ**

- ISO 14001 ວ່າດ້ວຍມາດຕະຖານ ລະບົບການຄຸ້ມຄອງສິ່ງແວດລ້ອມ, 2004.

## ເອກະສານຄັດຕິດ 3 ງົບປະມານ

**1.** ພັນທະຂອງບໍລິສັດໃນການສະໜອງງົບປະມານ ທີ່ຕິດພັນກັບວຽກງານ ການປະຕິບັດມາດຕະການດ້ານສິ່ງແວດ ລ້ອມສັງຄົມ ແລະ ທຳມະຊາດ ມີຄື:

| ລາຍການຄ່າໃຊ້ຈ່າຍ | ໄລຍະເວລາໂຄງການ | ຈຳນວນເງິນ/ອັດຕາແລກປ່ຽນ |
|---|---|---|
| | | |
| | | |

2. ພັນທະຂອງບໍລິສັດໃນການສະໜອງງົບປະມານ ທີ່ຕິດພັນກັບວຽກງານ ການຕິດຕາມກວດກາຂອງ ການຈັດຕັ້ງລັດ ກ່ຽວກັບ ການຈັດຕັ້ງປະຕິບັດມາດຕະການດ້ານສິ່ງແວດລ້ອມສັງຄົມ ແລະທຳມະຊາດ ລວມທັງການເຄື່ອນໄຫວວຽກງານ ຂອງ ໜ່ວຍງານຄຸ້ມຄອງສິ່ງແວດລ້ອມ ພາກສະໜາມ (EMU) ແລະ ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ໃນແຕ່ລະຂັ້ນ

| ລາຍການຄ່າໃຊ້ຈ່າຍ | ໄລຍະເວລາໂຄງການ | ຈຳນວນເງິນ/ອັດຕາແລກປ່ຽນ |
|---|---|---|
| | | |

| | | |
|---|---|---|
| | | |

3. ພັນທະຂອງບໍລິສັດໃນການສະໜອງງົບປະມານ ທີ່ຕິດພັນກັບວຽກງານ ການເຄື່ອນໄຫວຂອງໜ່ວຍງານຄຸ້ມຄອງສິ່ງແວດລ້ອມ ພາກສະໜາມ (EMU) ແລະ ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ໃນແຕ່ລະຂັ້ນ

| ລາຍການຄ່າໃຊ້ຈ່າຍ | ໄລຍະເວລາໂຄງການ | ຈຳນວນເງິນ/ອັດຕາແລກປ່ຽນ |
|---|---|---|
| | | |
| | | |

4. ພັນທະຂອງບໍລິສັດໃນການສະໜອງງົບປະມານ ທີ່ຕິດພັນກັບ ການທົດແທນຄ່າເສຍຫາຍ

| ລາຍການຄ່າໃຊ້ຈ່າຍ | ໄລຍະເວລາໂຄງການ | ຈຳນວນເງິນ/ອັດຕາແລກປ່ຽນ |
|---|---|---|
| | | |
| | | |

**ໝາຍເຫດ: ສຳລັບການປະຕິບັດການໃຊ້ຈ່າຍຕົວຈິງ ແມ່ໃຫ້ບໍລິສັດ ສະໜອງງົບປະມານຕາມແຜນການລະອຽດການທົດແທນຄ່າເສຍ ທີ່ໄດ້ຜ່ານການຮັບຮອງເອົາແລ້ວຂອງຄະນະກຳມະການຄຸ້ມຄອງການທົດແທນຄ່າເສຍຫາຍ ແຂວງ, ນະຄອນ.**

5. ພັນທະຂອງບໍລິສັດໃນການສະໜອງງົບປະມານ ປະກອບສ່ວນເຂົ້າໃນກອງທຶນປົກປັກຮັກສາສິ່ງແວດລ້ອມ

| ລາຍການຄ່າໃຊ້ຈ່າຍ | ໄລຍະເວລາໂຄງການ | ຈຳນວນເງິນ/ອັດຕາແລກປ່ຽນ |
|---|---|---|
| | | |
| | | |

6. ພັນທະຂອງບໍລິສັດໃນການສະໜອງງົບປະມານ ປະກອບສ່ວນເຂົ້າໃນກອງທຶນ ການພັດທະນາທ້ອງຖິ່ນ/ການພັດທະນາສັງຄົມ

| ລາຍການຄ່າໃຊ້ຈ່າຍ | ໄລຍະເວລາໂຄງການ | ຈຳນວນເງິນ/ອັດຕາແລກປ່ຽນ |
|---|---|---|
| | | |
| | | |

7. ພັນທະຂອງບໍລິສັດໃນການສະໜອງງົບປະມານ ການບູລະນະຟື້ນຟູສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ

| ລາຍການຄ່າໃຊ້ຈ່າຍ | ໄລຍະເວລາໂຄງການ | ຈຳນວນເງິນ/ອັດຕາແລກປ່ຽນ |
|---|---|---|
| | | |

| | | |
|---|---|---|
| | | |

8. ພັນທະຂອງບໍລິສັດໃນການສະໜອງງົບປະມານ ໃນການສ້າງຄວາມເຂັ້ມແຂງ ໃຫ້ແກ່ການຈັດຕັ້ງລັດທີ່ກ່ຽວຂ້ອງ ທັງສູນກາງແລະທ້ອງຖິ່ນ ລວມທັງ ໜ່ວຍງານຄຸ້ມຄອງສິ່ງແວດລ້ອມ ພາກສະໜາມ (EMU) ແລະ ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ໃນແຕ່ລະຂັ້ນ

| ລາຍການຄ່າໃຊ້ຈ່າຍ | ໄລຍະເວລາໂຄງການ | ຈຳນວນເງິນ/ອັດຕາແລກປ່ຽນ |
|---|---|---|
| | | |
| | | |

**ໝາຍເຫດ: ສຳລັບລາຍລະອຽດກ່ຽວກັບລາຍການໃຊ້ຈ່າຍ, ໄລຍະເວລາ ແລະ ຈຳນວນເງິນ ຂອງແຕ່ລະກິດຈະກຳແມ່ນຈະໄດ້ເອົາມາຈາກ ຜຄຕສ ທີ່ໄດ້ຜ່ານການຮັບຮອງຂອງ ກຊສ ມາແລ້ວ.**

**ເອກະສານຄັດຕິດ 4 ການປັບໄໝ**

| **ການລະເມີດ / ຄວາມບົກຜ່ອງ** | **ຈຳນວນເງິນ ສູງສຸດ ແລະ ຕ່ຳສຸດ ທີ່ມີຫົວໜ່ວຍເປັນໂດລາສະຫະລັດ** | **ປັດໃຈ ການຫຼີກລ້ຽງ** | **ມາດຕະການ ທີ່ ກຊສ ຈະໄດ້ປະຕິບັດຕໍ່ຜູ້ລະເມີດ (ແຕ່ບໍ່ຈຳກັດສະເພາະເທົ່ານີ້)** |
|---|---|---|---|
| ບໍ່ໄດ້ສົ່ງບົດລາຍງານ ຫລື ສົ່ງບົດລາຍງານຊັກຊ້າ ກວ່າເວລາທີ່ກຳນົດໄວ້ ເກີນກວ່າ 10 ວັນ | 100 ຫາ 500<br><br>ບວກເພີ່ມເຕີມອີກ 10 ຫາ 25 ຕໍ່ວັນ ຈົນກວ່າແກ້ໄຂສຳເລັດ | • ຈິງໃຈກະທຳ<br>• ປະຫວັດການລະເມີດ ຫລື ຄວາມບົກຜ່ອງ<br>• ລັກສະນະຈຳເພາະຂອງບົດລາຍງານ / ຄວາມບົກຜ່ອງທີ່ບໍ່ໄດ້ຍື່ນບົດລາຍງານເຫດການອຸປະຕິເຫດ | ແຈ້ງເຕືອນ ກ້າວໄປຈົນເຖິງມີການປັບໄໝ ຫລື ການຍົກເລີກຖາວອນ ຫລື ຊົ່ວຄາວໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ |
| ກີດຂວາງ ຫລື ແຊກແຊງ ເຈົ້າໜ້າທີ່ ໃນການປະຕິບັດໜ້າທີ່ ທີ່ຕິດພັນກັບເອກະສານຊ້ອນທ້າຍສະບັບນີ້ | 250 ຫາ 5,000 | • ຈິງໃຈກະທຳ<br>• ປະຫວັດການລະເມີດ ຫລື ຄວາມບົກຜ່ອງ<br>• ມີຄວາມເປັນໄປໄດ້ທີ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ, ສຸຂະພາບ ແລະ ຊີວິດການເປັນຢູ່ ຂອງປະຊາຊົນ ຢ່າງຮຸນແຮງ | ແຈ້ງເຕືອນ ກ້າວໄປຈົນເຖິງມີການປັບໄໝ ຫລື ການຍົກເລີກຖາວອນ ຫລື ຊົ່ວຄາວໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ |

| ການລະເມີດ / ຄວາມບົກຜ່ອງ | ຈຳນວນເງິນ ສູງສຸດ ແລະ ຕ່ຳສຸດ ທີ່ມີຫົວໜ່ວຍເປັນໂດລາສະຫະລັດ | ປັດໄຈ ການຫຼຸດຫຼົ້ງ | ມາດຕະການ ທີ່ ກຊສ ຈະໄດ້ປະຕິບັດຕໍ່ຜູ້ລະເມີດ (ແຕ່ບໍ່ຈຳກັດສະເພາະເທົ່ານີ້) |
|---|---|---|---|
| ໃຫ້ຂໍ້ມູນຜິດ ແກ່ ກຊສ ຫລື ເຮັດໃຫ້ ກຊສ ຕີຄວາມໝາຍຜິດ ຫລືເຫດຜົນອື່ນທີ່ຕິດພັນກັບຫົວຂໍ້ທີ່ລະບຸໄວ້ໃນເອກະສານຊ້ອນທ້າຍສະບັບນີ້ | 1,000 ຫາ 5,000 | • ຈົງໃຈກະທຳ<br>• ປະຫວັດການລະເມີດ ຫລື ຄວາມບົກຜ່ອງ<br>• ມີຄວາມເປັນໄປໄດ້ທີ່ ສິ່ງຜົນກະທົບຕໍ່ສິ່ງແວດລ້ອມ ຫລື ສຸຂະພາບປະຊາຊົນຢ່າງຮຸນແຮງ | ແຈ້ງເຕືອນ ກ້າວໄປຈົນເຖິງມີການປັບໄໝ ຫລື ການຍົກເລີກຖາວອນ ຫລື ຊົ່ວຄາວ ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ |
| ບົກຜ່ອງໃນການສະໜອງຂໍ້ມູນ ແກ່ ເຈົ້າໜ້າທີ່ຕິດຕາມກວດກາຂອງ ກຊສ ຫລື ຕາງໜ້າ ກຊສ ລວມທັງ ອົງການຕິດຕາມກວດກາ ເມື່ອມີການຂໍຂໍ້ມູນທີ່ກ່ຽວຂ້ອງກັບການຕິດຕາມກວດກາ ແລະກວດການ ຕາມທີ່ໄດ້ກຳນົດໄວ້ ເອກະສານຊ້ອນທ້າຍສະບັບນີ້. | 250 ຫາ 5,000 | • ຈົງໃຈກະທຳ<br>• ປະຫວັດການລະເມີດ ຫລື ຄວາມບົກຜ່ອງ<br>• ມີຄວາມເປັນໄປໄດ້ທີ່ ສິ່ງຜົນກະທົບຕໍ່ສິ່ງແວດລ້ອມ ຫລື ສຸຂະພາບປະຊາຊົນຢ່າງຮຸນແຮງ | ແຈ້ງເຕືອນ ກ້າວໄປຈົນເຖິງມີການປັບໄໝ ຫລື ການຍົກເລີກຖາວອນ ຫລື ຊົ່ວຄາວ ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ |
| ດຳເນີນ ຫລືປ່ອຍໃຫ້ຜູ້ຮັບເໝົາຫລັກ ຫລື ຜູ້ຮັບເໝົາຍ່ອຍ ດຳເນີນວຽກກະກຽມໃດໆ ຫລືວຽກກໍ່ສ້າງອື່ນໆ ໂດຍບໍ່ທັນໄດ້ຮັບການອະນຸມັດ ຜຄຕສ-ກສ ສະບັບປັບປຸງ ຈາກ ກຊສ ເສຍກ່ອນ | 1,000 ຫາ 5,000 ບວກຕື່ມອີກ 50 ຫາ 500 ຕໍ່ວັນ ຈົນກວ່າແກ້ໄຂສຳເລັດ | • ຈົງໃຈກະທຳ<br>• ປະຫວັດການລະເມີດ ຫລື ຄວາມບົກຜ່ອງ<br>• ມີຄວາມເປັນໄປໄດ້ທີ່ ສິ່ງຜົນກະທົບຕໍ່ສິ່ງແວດລ້ອມ ຫລື ສຸຂະພາບປະຊາຊົນຢ່າງຮຸນແຮງ | ແຈ້ງເຕືອນ ກ້າວໄປຈົນເຖິງມີການປັບໄໝ ຫລື ການຍົກເລີກຖາວອນ ຫລື ຊົ່ວຄາວ ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ |
| ດຳເນີນໂຄງການ ຫລື ຈັດຕັ້ງປະຕິບັດໂຄງການ ໂດຍບໍ່ທັນໄດ້ຮັບອະນຸຍາດ ຈາກ ກຊສ ຫລື ບໍ່ໄດ້ຮັບການອະນຸມັດ ຜຄຕສ-ກສ ຫລື | 1,000 ຫາ 5,000 ບວກເພີ່ມອີກ | • ຈົງໃຈກະທຳ<br>• ປະຫວັດການລະເມີດ ຫລື ຄວາມບົກຜ່ອງ<br>• ມີຄວາມເປັນໄປໄດ້ທີ່ ສິ່ງຜົນກະທົບຕໍ່ສິ່ງແວດລ້ອມ | ແຈ້ງເຕືອນ ກ້າວໄປຈົນເຖິງມີການປັບໄໝ ຫລື ການຍົກເລີກຖາວອນ ຫລື ຊົ່ວຄາວ ໃບຢັ້ງຢືນກ່ຽວກັບສິ່ງ |

| ການລະເມີດ / ຄວາມບົກຜ່ອງ | ຈຳນວນເງິນ ສູງສຸດ ແລະ ຕ່ຳສຸດ ທີ່ມີຫົວໜ່ວຍເປັນໂດລາ ສະຫະລັດ | ປັດໄຈ ການຫຼີກລ້ຽງ | ມາດຕະການ ທີ່ ກຊສ ຈະໄດ້ປະຕິບັດ ຕໍ່ຜູ້ລະເມີດ (ແຕ່ບໍ່ຈຳກັດສະເພາະເທົ່ານີ້) |
|---|---|---|---|
| ຜຄຕສ-ດງ ຈາກ ກຊສ | 50 ຫາ 500 ຕໍ່ວັນ ຈົນກວ່າແກ້ໄຂສຳເລັດ | ຫລື ສຸຂະພາບປະຊາຊົນຢ່າງຮຸນແຮງ | ແວດລ້ອມ |
| ບໍ່ປະຕິບັດຕາມໜັງສື ແຈ້ງເຕືອນ ຫລື ແຈ້ງໂຈະ ໂດຍອີງຕາມການລະເມີດ ເອກະສານຊ້ອນທ້າຍສະບັບນີ້ | 2,000 ຫາ 10,000 ບວກເພີ່ມອີກ 100 ຫາ 500 ຕໍ່ວັນ ຈົນກວ່າແກ້ໄຂສຳເລັດ | • ຈົງໃຈກະທຳ ,ບໍ່ພິຈາລະນາຖີ່ຖ້ວນ<br>• ປະຫວັດການລະເມີດ ຫລື ຄວາມບົກຜ່ອງ<br>• ມີຄວາມເປັນໄປໄດ້ທີ່ ສິ່ງຜົນກະທົບຕໍ່ສິ່ງແວດລ້ອມ ຫລື ສຸຂະພາບປະຊາຊົນຢ່າງຮຸນແຮງ | ການລະເມີດສັນຍາ ຕ້ອງຖືກປັບໄໝ ແລະ /ຫລື ການຍົກເລີກຖາວອນ ຫລື ຊົ່ວຄາວ ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ |
| ຄວາມບົກຜ່ອງ ໃນການແຈ້ງໃຫ້ ກຊສ ຊາບ ກ່ຽວກັບ<br>ອຸປະຕິເຫດ ຫລື ເຫດການສຸກເສີນທາງດ້ານສິ່ງແວດລ້ອມ ທີ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ | 1,000ຫາ 5,000 | • ຈົງໃຈກະທຳ ,ບໍ່ພິຈາລະນາຖີ່ຖ້ວນ<br>• ປະຫວັດການລະເມີດ ຫລື ຄວາມບົກຜ່ອງ<br>• ມີຄວາມເປັນໄປໄດ້ທີ່ ສິ່ງຜົນກະທົບຕໍ່ສິ່ງແວດລ້ອມ ຫລື ສຸຂະພາບປະຊາຊົນຢ່າງຮຸນແຮງ | ການລະເມີດສັນຍາ ຕ້ອງຖືກປັບໄໝ ແລະ /ຫລື ການຍົກເລີກຖາວອນ ຫລື ຊົ່ວຄາວ ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ |
| ຄວາມບົກຜ່ອງ ໃນການຈັດຕັ້ງປະຕິບັດມາດຕະການປ້ອງກັນ ອຸປະຕິເຫດ ຫລື | 2,500 ຫາ 10,000 | • ຈົງໃຈກະທຳ ,ບໍ່ພິຈາລະນາຖີ່ຖ້ວນ | ແຈ້ງເຕືອນ ກ້າວໄປຈົນເຖິງມີການປັບໄໝ |

| ການລະເມີດ / ຄວາມບົກຜ່ອງ | ຈຳນວນເງິນ ສູງ ສຸດ ແລະ ຕ່ຳ ສຸດ ທີ່ມີຫົວໜ່ວຍ ເປັນໂດລາ ສະຫະລັດ | ປັດໃຈ ການຫຼີກລ້ຽງ | ມາດຕະການ ທີ່ ກຊສ ຈະໄດ້ປະຕິບັດ ຕໍ່ຜູ້ລະເມີດ (ແຕ່ບໍ່ຈຳກັດສະເພາະເທົ່ານີ້) |
|---|---|---|---|
| ເຫດການສຸກເສີນທາງດ້ານ ສິ່ງແວດລ້ອມ ທີ່ຈະສົ່ງຜົນ ກະ ທົບຕໍ່ສິ່ງແວດລ້ອມ, ສຸຂະພາບ, ຊີວິດການເປັນຢູ່ ຫລື ຊັບສິນຂອງປະຊາຊົນ ຊຶ່ງເປັນມາດຕະການ ທີ່ສາ ມາດຈັດຕັ້ງປະຕິບັດໄດ້ບົນ ພື້ນຖານ ຜຄຕສ-ກສ/ ຜຄຕສ-ດງ | | • ປະຫວັດການລະເມີດ ຫລື ຄວາມບົກຜ່ອງ<br>• ມີຄວາມເປັນໄປໄດ້ທີ່ ສິ່ງ ຜົນກະທົບຕໍ່ສິ່ງແວດລ້ອມ ທຳມະຊາດ ຫລື ສຸຂະພາບ ປະຊາຊົນ ຢ່າງຮຸນແຮງ | ຫລື ການຍົກເລີກ ຖາວອນ ຫລື ຊົ່ວຄາວ ໃບຢັ້ງຢືນກ່ຽວກັບສິ່ງ ແວດລ້ອມ |
| ມີຄວາມບົກຜ່ອງ ໃນການ ປະຕິບັດຕາມ ເງື່ອນໄຂ ໃບຢັ້ງຢືນກ່ຽວກັບ ສິ່ງແວດລ້ອມ, ໜັງສື ອະນຸມັດ ຫລື ຄ່າຈຳກັດ ການປ່ອຍມົນລະພິດ (ຕໍ່ ການລະເມີດໜຶ່ງຄັ້ງ / ກໍລະນີ) | 1,000 ຫາ 10,000 | • ຈົງໃຈກະທຳ ,ບໍ່ພິຈາລະນາ ຖີ່ຖ້ວນ<br>• ປະຫວັດການລະເມີດ ຫລື ຄວາມບົກຜ່ອງ<br>• ມີຄວາມເປັນໄປໄດ້ທີ່ ສິ່ງ ຜົນກະທົບຕໍ່ສິ່ງແວດລ້ອມ ຫລື ສຸຂະພາບປະຊາຊົນ ຢ່າງຮຸນແຮງ | ແຈ້ງເຕືອນ ກ້າວໄປ ຈົນເຖິງມີການປັບໄໝ ຫລື ການຍົກເລີກ ຖາວອນ ຫລື ຊົ່ວຄາວ ໃບຢັ້ງຢືນກ່ຽວກັບສິ່ງ ແວດລ້ອມ |
| ມີຄວາມບົກຜ່ອງ ໃນການ ຈ່າຍງົບປະມານໃຫ້ ແກ່ ໜ່ວຍງານຄຸ້ມຄອງສິ່ງແວດ ລ້ອມ ພາກສະໜາມ, ການ ທົດແທນຄ່າເສຍຫາຍໃຫ້ ແກ່ປະຊາຊົນ ທີ່ໄດ້ກຳນົດ ໄວ້ ແລະ ກໍລະນີ ໄດ້ກຳນົດ ໄວ້ ໃນເອກະສານຊ້ອນທ້າຍ ສະບັບນີ້ | 1,000 ຫາ 10,000 | • ຈົງໃຈກະທຳ ,ບໍ່ພິຈາລະນາ ຖີ່ຖ້ວນ<br>• ປະຫວັດການລະເມີດ ຫລື ຄວາມບົກຜ່ອງ<br>• ມີຄວາມເປັນໄປໄດ້ທີ່ ສິ່ງ ຜົນກະທົບຕໍ່ສິ່ງແວດລ້ອມ ຫລື ສຸຂະພາບປະຊາຊົນ ຢ່າງຮຸນແຮງ | ແຈ້ງເຕືອນ ກ້າວໄປ ຈົນເຖິງມີການປັບໄໝ ຫລື ການຍົກເລີກ ຖາວອນ ຫລື ຊົ່ວຄາວ ໃບຢັ້ງຢືນກ່ຽວກັບສິ່ງ ແວດລ້ອມ |
| ມີຄວາມບົກຜ່ອງ ໃນການ ໃຫ້ ສິດແກ່ຜູ້ໄດ້ຮັບຜົນ | 1,000 ຫາ 10,000 | • ຈົງໃຈກະທຳ ,ບໍ່ພິຈາລະນາ ຖີ່ຖ້ວນ | ແຈ້ງເຕືອນ ກ້າວໄປ ຈົນເຖິງມີການປັບໄໝ |

| ການລະເມີດ / ຄວາມບົກຜ່ອງ | ຈຳນວນເງິນ ສູງສຸດ ແລະ ຕ່ຳສຸດ ທີ່ມີຫົວໜ່ວຍເປັນໂດລາສະຫະລັດ | ປັດໃຈ ການຫຼີກລ້ຽງ | ມາດຕະການ ທີ່ ກຊສ ຈະໄດ້ປະຕິບັດ ຕໍ່ຜູ້ລະເມີດ (ແຕ່ບໍ່ຈຳກັດສະເພາະເທົ່ານີ້) |
|---|---|---|---|
| ກະທົບ ແກ່ ໜ່ວຍງານຄຸ້ມຄອງການທົດແທນຄ່າເສຍຫາຍ ຕາມທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍສະບັບນີ້ | | • ປະຫວັດການລະເມີດ ຫລື ຄວາມບົກຜ່ອງ<br>• ມີຄວາມເປັນໄປໄດ້ທີ່ ສິ່ງຜົນກະທົບຕໍ່ສິ່ງແວດລ້ອມ ຫລື ສຸຂະພາບປະຊາຊົນຢ່າງຮຸນແຮງ | ຫລື ການຍົກເລີກຖາວອນ ຫລື ຊົ່ວຄາວໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ |
| ມີຄວາມບົກຜ່ອງໃນການບູລະນະຟື້ນຟູພື້ນທີ່ໄດ້ຮັບຜົນກະທົບຈາກໂຄງການ ຕາມທີ່ໄດ້ລະບຸໄວ້ໃນ ເອກະສານຊ້ອນທ້າຍສະບັບນີ້ | 1,000 ຫາ 10,000 | • ຈົງໃຈກະທຳ ,ບໍ່ພິຈາລະນາຖີ່ຖ້ວນ<br>• ປະຫວັດການລະເມີດ ຫລື ຄວາມບົກຜ່ອງ<br>• ສິ່ງຜົນກະທົບຕໍ່ສິ່ງແວດລ້ອມ ຫລື ສຸຂະພາບປະຊາຊົນ ຢ່າງຮຸນແຮງ | ແຈ້ງເຕືອນ ກ້າວໄປຈົນເຖິງມີການປັບໄໝ ຫລື ການຍົກເລີກຖາວອນ ຫລື ຊົ່ວຄາວໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ລະເມີດສັນຍາ |
| ຄວາມບົກຜ່ອງ ຫລື ຄວາມຊັກຊ້າ ໃນການເຮັດໃຫ້ສຳເລັດ ແຜນການລະອຽດການທົດແທນຄ່າເສຍ ຕາມທີ່ກຳນົດໄວ້ໃນເອກະສານຊ້ອນທ້າຍສະບັບນີ້ | 50.000 | • ຈົງໃຈກະທຳ, ບໍ່ພິຈາລະນາຖີ່ຖ້ວນ<br>• ປະຫວັດການລະເມີດ ຫລື ຄວາມບົກຜ່ອງ | ແຈ້ງເຕືອນ ກ້າວໄປຈົນເຖິງມີການປັບໄໝ ຫລື ການຍົກເລີກຖາວອນ ຫລື ຊົ່ວຄາວໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ |

ບໍລິສັດ ຕ້ອງຮັບຮູ້ ແລະ ຍອມຮັບລະດັບການວາງມາດຕະການຕໍ່ຜູ້ລະເມີດ ທີ່ກຳນົດໄວ້ຂ້າງເທິງ ແລະ ຍິນດີທີ່ຈະບໍ່ຂັດຂ້ອງ ການປະຕິບັດມາດຕະການ ຕາມເອກະສານຊ້ອນທ້າຍ ແລະ ເອກະສານຄັດຕິດ ສະບັບນີ້. ບໍລິສັດຕ້ອງຈ່າຍອັດຕາຄ່າປັບໄໝ ໃຫ້ຄົບຖ້ວນ ແລະ ບໍ່ຊັກຊ້າ.

ອັດຕາການປັບໄໝທັງໝົດ ທີ່ລະບຸໄວ້ໃນເອກະສານຄັດຕິດສະບັບນີ້ ມີຫົວໜ່ວຍເປັນ ໂດລາສະຫະລັດ (USD) ແລະ ຕ້ອງໄດ້ຖືກປັບເປັນແຕ່ລະປີ ເພື່ອສະທ້ອນເຖິງອັດຕາເງິນເຟີ້, ບົນພື້ນຖານດັດສະນີຜູ້ຊົມໃຊ້ຂອງຄົນລາວ (Lao CPI).

**ເອກະສານຄັດຕິດ 5 ຕາຕະລາງຜົນກະທົບ ແລະ ມາດຕະການແກ້ໄຂ ຫລຸດຜ່ອນ**

| ກິດຈະກຳຂອງໂຄງການ | ຜົນກະທົບ | ແຫລ່ງທີ່ມາຂອງຜົນກະທົບ | ລະດັບຜົນກະທົບ | | | ມາດຕະການຫລຸດຜ່ອນ | ລະດັບຜົນກະທົບຫລັງການຫລຸດຜ່ອນ | | | ຜູ້ຮັບຜິດຊອບຈັດຕັ້ງປະຕິບັດ | ງົບປະມານ |
|---|---|---|---|---|---|---|---|---|---|---|---|
| | | | ຕ່ຳ | ກາງ | ສູງ | | ຕ່ຳ | ກາງ | ສູງ | | |
| | | | | | | | | | | | |
| | | | | | | | | | | | |
| | | | | | | | | | | | |

**ໝາຍເຫດ: ທຸກລາຍການທີ່ລະບຸໄວ້ໃນຕາຕະລາງຂ້າງເທິງນີ້ ແມ່ນຈະໄດ້ຄັດຈ້ອນເອົາມາຈາກ ຜຄຕສ ທີ່ ກຊສ ໄດ້ຮັບຮອງ**

## ເອກະສານຄັດຕິດ 6 ແຜນການເຕັກນິກສະເພາະ

1. **ແຜນການຄຸ້ມຄອງຊີວະນາໆພັນ** ຊຶ່ງປະກອບດ້ວຍມາດຕະການຄຸ້ມຄອງ ແລະປົກປັກຮັກສາປ່າໄມ້, ຊັບພະຍາກອນປ່າໄມ້ ລວມທັງສັດປ່າ-ສັດນ້ຳ ໃຫ້ມີຜົນກະທົບໜ້ອຍທີ່ສຸດຈາກໂຄງການ;
2. **ແຜນການ ຄຸ້ມຄອງສັດຕູພືດ ແບບປະສົມປະສານ** ຊຶ່ງປະກອບດ້ວຍແຜນການຄຸ້ມຄອງສະເພາະ ສຳລັບແຕ່ລະຊະນິດ ພັນສັດຕູພືດ, ຫຍ້າ, ເຊື້ອພະຍາດ ແລະ ລາຍລະອຽດກ່ຽວກັບມາດຕະການຄວບຄຸມແຕ່ລະຊະນິດພັນສະເພາະ ແລະ ແຜນການສຸກເສີນ ແນໃສ່ຮັບປະກັນ ຄວາມສາມາດໃນການຄຸ້ມຄອງ ແລະ ຫລຸດຜ່ອນຜົນກະທົບ ຈາກສັດຕູພືດ, ຫຍ້າ ແລະ ເຊື້ອພະຍາດ ແລະ ສັດຕູພືດຊະນິດໃໝ່ອາດເກີດຂື້ນມີໃນຂອບເຂດໂຄງການ ໂດຍສະເພາະໃນຊ່ວງໄລຍະເວລາການດຳເນີນໂຄງການ;
3. **ແຜນການຄຸ້ມຄອງສານເຄມີ** ຊຶ່ງປະກອບດ້ວຍ ລາຍລະອຽດ ກ່ຽວກັບ ການນຳເຂົ້າສານເຄມີທັງໝົດ ທີ່ບໍລິສັດຈະໄດ້ນຳໃຊ້ ລວມທັງຊື່ຂອງສ່ວນປະກອບຂອງສານເຄມີ ແລະ ຊື່ການຄ້າຂອງຜະລິດຕະພັນຢາປາບສັດຕູພືດທີ່ນຳໃຊ້, ລາຍລະອຽດວິທີນຳໃຊ້, ອັດຕາການນຳໃຊ້, ກຳນົດສະເພາະສຳລັບການຈຳກັດຂອງຂະໜາດ ແລະ ວິທີການເກັບຮັກສາ ແລະການກຳຈັດສິ່ງເສດເຫຼືອ ແລະ ມາດຕະການອື່ນທີ່ກ່ຽວຂ້ອງທັງໝົດ ທີ່ຈະຕ້ອງໄດ້ຮັບການຈັດຕັ້ງປະຕິບັດ ເພື່ອຫຼຸດຜ່ອນການປົນເປື້ອນຂອງສານເຄມີ, ສານຕົກຄ້າງຂອງຢາຂ້າແມງໄມ້, ວິທີການປ້ອງກັນຂອງພະນັກງານໂຄງການ ແລະ ປະຊາຊົນທ້ອງຖິ່ນ;
4. **ແຜນການຄຸ້ມຄອງຊັບພະຍາກອນນ້ຳ** ຊຶ່ງປະກອບດ້ວຍ ລາຍລະອຽດກ່ຽວກັບຄວາມຕ້ອງການນ້ຳ ຂອງຊະນິດພັນໄມ້ປູກ ແລະ ນ້ຳທີ່ມີຢູ່ (ບໍ່ວ່າຈະເປັນ ທັງນ້ຳຝົນ ຫຼື ນ້ຳຊົນລະປະທານ ເພີ່ມເຕີມ), ໃນແຜນການຕ້ອງລະບຸສາຍນ້ຳທັງໝົດ ແລະ ໜອງບຶງ (ຖາວອນ ຫຼື ຊົ່ວ ຄາວ) ຢູ່ພາຍໃນພື້ນທີ່ຄາດຄະເນ ຈະໄດ້ຮັບຜົນ

ກະທົບ ຈາກກິດຈະກຳຕ່າງໆຂອງໂຄງການ, ຕ້ອງລະບຸມາດຕະການປ້ອງກັນນ້ຳໜ້າດິນ ແລະນ້ຳໄຕ້ດິນ ຈາກການປົນເປື້ອນສານເຄມີ, ຮັບປະກັນການເຊາະເຈື່ອນຂອງດິນໃຫ້ໜ້ອຍທີ່ສຸດ, ການອະນຸລັກ (ບໍ່ໃຫ້ມີການປ່ຽນແປງ) ພື້ນທີ່ແຄມຝັ່ງນໍ້າ, ໜອງບຶງ ແລະ ປ້ອງກັນບໍ່ໃຫ້ມີຜົນສະທ້ອນຕໍ່ສາຍນ້ຳ. ນອກນີ້, ຕ້ອງລະບຸ ແລະ ກຳນົດ ໄລຍະເຂດກັນຊົນ ແຄມຝັ່ງນ້ຳ ຕະຫລອດສາຍນ້ຳ ແລະ ໜອງບຶງ ພ້ອມທັງ ລະບຸ ແລະ ຄິດໄລ່ປະລິມານການນຳໃຊ້ນ້ຳໜ້າດິນ, ນ້ຳໃຕ້ດິນ ສຳລັບຊົນລະປະ ທານ ຫຼື ຈຸດປະສົງອື່ນໆ ແລະ ຮັບປະກັນພື້ນຖານ ລະດັບການໄຫລຕ່ຳສຸດຂອງສາຍນ້ຳ ແລະໜອງບຶງ;

5. **ແຜນການຄຸ້ມຄອງຊັບພະຍາກອນດິນ** ຊຶ່ງປະກອບດ້ວຍ ລາຍລະອຽດ ກ່ຽວກັບ ມາດຕະການທັງໝົດ ເພື່ອປ້ອງກັນຄຸນນະພາບຊັບພະຍາກອນດິນ ຢູ່ພາຍໃນ ແລະ ເຂດໄກ້ຄຽງທີ່ຕັ້ງໂຄງການ ຈາກການເຊາະເຈື່ອນ, ການອັດແໜ້ນ ແລະ ການເຊື່ອມໂຊມຂອງຄຸນນະພາບດິນ ລວມທັງ ຊັບພະຍາກອນດິນ ໃນເຂດຄ້ອຍຊັນ ຢູ່ພາຍໃນ ແລະ ເຂດໄກ້ຄຽງ ທີ່ຕັ້ງໂຄງການ ແລະ ພາຍໃນ ເຂດກັນຊົນ ແຄມຝັ່ງນ້ຳ ຕະລອດສາຍນ້ຳ ແລະໜອງບຶງ. ນອກນີ້, ຍັງ ໄດ້ກຳນົດມາດຕະການບໍລຸງຮັກສາຄຸນນະພາບດິນ ຕະລອດໄລຍະສຳປະທານໂຄງການ ແລະ ຮັບປະກັນວ່າ ສານອາຫານ ໂດຍຜ່ານທາງຝຸ່ນຊີວະພາບ (ຝຸ່ນສັດ, ຝຸ່ນບົ່ມ, ເສດພືດ, ຫຍ້າ ແລະ ແຫລ່ງຊີວະພາບອື່ນໆ) ທັງໝົດ, ບໍ່ວ່າຈະເປັນ ແຫຼ່ງຝຸ່ນຊີວະພາບ ຫຼືຝຸ່ນເຄມີ ຕ້ອງໃຫ້ສອດຄ່ອງກັບມາດຕະຖານສາກົນ ແລະສ້າງປຶດບັນຍັດລະບຸ ການປ້ອງກັນການປົນເປື້ອນ ນ້ຳໜ້າດິນ ແລະ ນ້ຳໃຕ້ດິນ ຜ່ານການໄຫລອອກສູ່ແຫລ່ງນ້ຳທຳມະຊາດ ຫຼືການຊຶມລົງ;
6. **ແຜນການຄຸ້ມຄອງໄຟໄໝ້** ຢູ່ພາຍໃນ ແລະ ເຂດໄກ້ຄຽງ ທີ່ຕັ້ງໂຄງການ ຊຶ່ງປະກອບດ້ວຍລາຍລະອຽດກ່ຽວກັບມາດຕະການຄຸ້ມຄອງ, ການຄວບຄຸມ ໄຟທີ່ເກີດຂຶ້ນ ເພື່ອປ້ອງກັນແຫລ່ງປູກໄມ້, ພື້ນຖານໂຄງລ່າງ, ຊັບພະຍາກອນທຳມະຊາດ ແລະ ກະສິກຳ ຢູ່ເຂດໄກ້ຄຽງ ແລະຜົນກະທົບດ້ານລົບ ຕໍ່ຊຸມຊົນທ້ອງຖິ່ນ ແລະ ສັດປ່າ. ນອກນີ້, ຕ້ອງໄດ້ກຳນົດມາດຕະການຕິດຕາມກວດກາ ແລະ ລາດຕະເວນ, ການມີສ່ວນຮ່ວມຂອງຊຸມຊົນ ແລະ ການຝຶກອົບຮົມ ໃນການປ້ອງກັນໄຟປ່າ, ມາດຕະການຄວບຄຸມ ແລະ ຄວາມປອດໄພ;
7. **ແຜນການວາງແຜນພື້ນທີ່ລວມ** ຊຶ່ງສ້າງເປັນແຜນທີ່ພູມສາດ ຂະໜາດທີ່ຈະແຈ້ງ ເຊັ່ນ: GIS, ໂດຍມີລາຍລະອຽດກ່ຽວກັບທີ່ຕັ້ງໂຄງການທັງໝົດ ແລະ ພື້ນທີ່ໄກ້ຄຽງ, ໃນນັ້ນ ປະກອບມີ:
   i. ພື້ນທີ່ການປູກໄມ້ທັງໝົດ;
   ii. ແຜນທີ່ ຂອງສາຍນ້ຳ ແລະໜອງບຶງ ທັງໝົດ, ບໍ່ວ່າຈະເປັນແບບຖາວອນ ຫຼື ຊົ່ວຄາວ ແລະເຂດສະຫງວນ ກັນຊົນແຄມຝັ່ງນ້ຳ;
   iii. ທີ່ຕັ້ງພູມສັນຖານຂອງໂຄງການ ລວມທັງ ການກຳນົດຈະແຈ້ງ ເຂດສະຫງວນພື້ນທີ່ຄ້ອຍຊັນ ເພື່ອປ້ອງກັນການເຊາະເຈື່ອນ;
   iv. ເຂດອະນຸລັກ ທີ່ມີຄຸນຄ່າສູງ ທັງໝົດ, ເຊັ່ນ ຊຶ່ງເຂດທຳມະຊາດ ທີ່ມີຄວາມອ່ອນໄຫວສູງ, ສະຖານທີ່ສຳຄັນ ທາງດ້ານວັດທະນະທຳ ແລະ ສັກກາລະບູຊາ;
   v. ພື້ນທີ່ປ່າໄມ້ ແລະ ເຂດປ້ອງກັນ ກ່ອນ ກິດຈະກຳ ບຸກເບີກພື້ນທີ່ ແລະ ການປູກໄມ້;
   vi. ການກັກຮັງນ້ຳ, ການທັນແລວນ້ຳ ແລະ ຄອງຊົນລະປະທານທັງໝົດ;
   vii. ພື້ນຖານໂຄງລ່າງຂອງໂຄງການທັງໝົດ, ບໍ່ວ່າຈະເປັນ ແບບຖາວອນ ຫຼື ຊົ່ວຄາວ;
   viii. ການກຳນົດ ແລະ ລະບຸມາດຕະການອະນຸລັກຮັກສາທີ່ປະຕິບັດ ໃນຕະຫຼອດເສັ້ນທາງລົດ ແລະ ທາງຍ່າງ ເພື່ອປ້ອງກັນ ການເຊາະເຈື່ອນ ແລະ ມາດຕະການທີ່ປະຕິບັດ ເພື່ອປ້ອງກັນ ຜົນກະທົບຕໍ່ສາຍນ້ຳໃນບ່ອນຂ້າມນ້ຳ ຫຼື ໜອງບຶງ;
   ix. ທີ່ດິນກະສິກຳ ແລະ ທີ່ຢູ່ອາໄສ ທັງໝົດ ທີ່ນຳໃຊ້ ໂດຍຊຸມຊົນທ້ອງຖິ່ນ;

x. ພື້ນທີ່ຕົ້ນຕໍ ທີ່ມີຄວາມສໍາຄັນ ຕໍ່ຊີວິດການເປັນຢູ່ ເຊັ່ນ: ເຂດທີ່ຕອບສະໜອງຜະລິດຕະພັນເຄື່ອງປ່າຂອງດົງ;

8. **ແຜນການມີສ່ວນຮ່ວມຂອງມວນຊົນ ແລະ ການແກ້ໄຂຂໍ້ຂັດແຍ່ງ** ຊຶ່ງປະກອບດ້ວຍ:

i. ວິທີການເຜີຍແຜ່ ແລະ ອຸປະກອນ ໃນຮູບແບບທີ່ເໝາະສົມກັບວັດທະນະທໍາ ແລະ ມີຄວາມເຂົ້າໃຈໄດ້ຢ່າງງ່າຍດາຍ, ອະທິບາຍ ໃຫ້ຊຸມຊົນທ້ອງຖິ່ນ ແລະ ຜູ້ຊົມໃຊ້ຊັບພະຍາກອນ ກ່ຽວກັບມູນຄ່າ, ຜົນປະໂຫຍດ ແລະຄວາມສ່ຽງທີ່ຕິດພັນກັບໂຄງການ, ລວມທັງ ແຜນການສະເພາະ, ຕາຕະລາງເວລາ ສໍາລັບແຕ່ລະຂັ້ນຕອນການຈັດຕັ້ງປະຕິບັດໂຄງການ, ຄວາມສ່ຽງທີ່ຕິດພັນກັບແຕ່ລະຂັ້ນຕອນ ແລະ ໂອກາດສໍາລັບການເຮັດວຽກນໍາໂຄງການ ຫຼື ຜົນປະໂຫຍດອື່ນໆ ທີ່ຕິດພັນກັບແຕ່ລະຂັ້ນຕອນຂອງໂຄງການ;

ii. ໂອກາດໃນການພັດທະນາ ທີ່ຕອບສະໜອງໂດຍໂຄງການ ພ້ອມດ້ວຍການແນະນໍາໃຫ້ສະມາຊິກ ຊຸມຊົນສາມາດເຂົ້າເຖິງໂອກາດ ດ້ວຍວິທີໃດ;

iii. ຈໍານວນງົບປະມານ ແລະ ແຫຼ່ງທຶນອື່ນໆ ທີ່ຈະຕອບສະໜອງ ໃຫ້ແກ່ກອງທຶນພັດທະນາຊຸມຊົນ ໂດຍບໍລິສັດ ພ້ອມດ້ວຍໄລຍະເວລາ ໃນການສະໜອງທຶນ;

iv. ສະໜັບສະໜູນການປົກປ້ອງ ສິດ, ວັດທະນະທໍາ, ຮີດຄອງ ແລະ ການອະນຸລັກສາສະໜາ ຂອງຊຸມຊົນ, ການຄອບຄອງທີ່ດິນ ແລະ ການຈັດສັນການນໍາໃຊ້ຂອງຊຸມຊົນ ລວມທັງ ສັນຍາເຊົ່າ ກັບຊຸມຊົນ ສໍາລັບດິນລວມແຕ່ລະບ້ານ ພາຍໃນພື້ນທີ່ ທີ່ກໍານົດ;

v. ມີກໍານົດກົນໄກທີ່ຈະແຈ້ງ, ມີຜູ້ຮັບຜິດຊອບ ແລະ ຂໍ້ກໍານົດອື່ນໆ ສໍາລັບການສະເໜີຮ້ອງທຸກລະຫວ່າງບໍລິສັດ, ຊຸມຊົນທ້ອງຖິ່ນ ແລະ ຜູ້ນໍາໃຊ້ຊັບພະຍາກອນ. ກົນໄກການຮ້ອງທຸກ ຕ້ອງຈະແຈ້ງ, ໂປ່ງໃສ ແລະ ຮັບຜິດຊອບ ໂດຍຮັບປະກັນອິດສະລະ ແລະ ຄວາມປອດໄພ ຂອງສະມາຊິກຊຸມຊົນ;

vi. ກົນໄກການແກ້ໄຂຂໍ້ຂັດແຍ່ງ ທີ່ສ້າງຕັ້ງຂຶ້ນ ພາຍໃຕ້ຂອບເຂດໂຄງການ ຕ້ອງບໍ່ຂັດຂວາງ ການເຂົ້າເຖິງຫຼືການເພິ່ງພາ ລະບົບຕຸລາການ ຂອງ ສປປ ລາວ;

9. **ແຜນການຄຸ້ມຄອງສຸຂະພາບ, ຄວາມປອດໄພ ແລະຊີວິດການເປັນຢູ່ຂອງຊຸມຊົນ** ປະກອບດ້ວຍມາດຕະການ ທີ່ຈະຕ້ອງໄດ້ດໍາເນີນການ ເພື່ອປ້ອງກັນ ແລະ ຫລຸດຜ່ອນ ແກ້ໄຂ ບັນຫາການປົນເປື້ອນຂອງນໍ້າ ແລະ ອາກາດຈາກການນໍາໃຊ້ສານເຄມີ, ສິ່ງເສດເຫຼືອອັນຕະລາຍອື່ນໆ ແລະ ມາດຕະການ ປ້ອງກັນຜົນກະທົບດ້ານລົບຕໍ່ ສັດລ້ຽງ, ສັດປ່າ ແລະ ຜະລິດຕະພັນເຄື່ອງປ່າຂອງດົງ ທີ່ເປັນເຈົ້າຂອງ ຫຼືນໍາໃຊ້ ໂດຍຊຸມຊົນທ້ອງຖິ່ນ. ນອກນີ້, ຍັງປະກອບດ້ວຍມາດຕະການປົກປ້ອງປະຊາຊົນຜູ້ທີ່ດ້ອຍໂອກາດ ເປັນພິເສດລວມທັງ ແມ່ຍິງ, ເດັກ ນ້ອຍ, ຜູ້ສູງອາຍຸ, ຜູ້ທຸກຍາກ ແລະ ຊົນເຜົ່າອື່ນໆ ພ້ອມທັງໄດ້ລະບຸມາດຕະການທີ່ດໍາເນີນການ ເພື່ອປ້ອງກັນ ແລະໃຫ້ບູລິມະສິດ ວຽກເຮັດງານທໍາ ຂອງສະມາຊິກຊຸມຊົນ ລວມທັງ ການປົກປ້ອງປະຊາຊົນ ຜູ້ທີ່ດ້ອຍໂອກາດ ແລະ ແຜນວຽກເຮັດງານທໍາຂອງທ້ອງຖິ່ນ.

**ເອກະສານຄັດຕິດ 7 ສິດ ຂອງຜູ້ໄດ້ຮັບຜົນກະທົບ**

ໃນການທົດແທນຄ່າເສຍຫາຍ ບໍລິສັດຕ້ອງ ໃຫ້ສິດ ແກ່ຜູ້ໄດ້ຮັບຜົນກະທົບ ດັ່ງລຸ່ມນີ້:

a. ໄດ້ຮັບຂໍ້ມູນຂ່າວສານ ກ່ຽວກັບ ໂຄງການພັດທະນາ, ຜົນປະໂຫຍດ ແລະ ຜົນກະທົບ ທີ່ຜູ່ໄດ້ຮັບຜົນກະທົບ ຈະໄດ້ຮັບ, ຄວາມຄືບໜ້າ ກ່ຽວກັບ ການປະຕິບັດແຜນການລະອຽດການທົດແທນຄ່າເສຍຫາຍ ຕະຫລອດໄລຍະເວລາ ການຈັດຕັ້ງປະຕິບັດໂຄງການພັດທະນາ;

b. ເຂົ້າຮ່ວມກອງປະຊຸມປຶກສາຫາລືໃນລະດັບຕ່າງໆ ເພື່ອປະກອບຄໍາເຫັນ ຕໍ່ ແຜນການລະອຽດການທົດແທນຄ່າເສຍຫາຍ;

c. ໄດ້ຮັບການທົດແທນຄ່າເສຍຫາຍ ຕາມແຜນການລະອຽດການທົດແທນຄ່າເສຍຫາຍ;

d. ສະເໜີເປັນລາຍລັກອັກສອນ ຕາມຂະບວນການແກ້ໄຂຂໍ້ສະເໜີ ເພື່ອພິຈາລະນາ ແກ້ໄຂບັນຫາ ທີ່ຕິດພັນກັບການທົດແທນຄ່າເສຍຫາຍ;

e. ເຂົ້າຮ່ວມຢ່າງເປັນເຈົ້າການ ໃນການຈັດຕັ້ງປະຕິບັດແຜນການລະອຽດການທົດແທນຄ່າເສຍຫາຍ.

## ເອກະສານຄັດຕິດ 8 ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ

### 1. ການແຕ່ງຕັ້ງ ແລະ ໂຄງປະກອບຂອງ ຄະນະຮັບຜິດຊອບ ການທົດແທນຄ່າເສຍຫາຍ

ຄະນະຮັບຜິດຊອບ ການທົດແທນຄ່າເສຍຫາຍ ປະກອບດ້ວຍ:

1. ຄະນະກຳມະການຄຸ້ມຄອງການທົດແທນຄ່າເສຍຫາຍ ແຂວງ, ນະຄອນ ຊຶ່ງຈະໄດ້ຮັບການແຕ່ງຕັ້ງໂດຍ ລັດຖະບານ ຕາມການສະເໜີຂອງ ລັດຖະມົນຕີ ວ່າການ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງ ແວດ ລ້ອມ ໃນໄລຍະເວລາ ບໍລິສັດ ສຳເລັດການສ້າງ ຮ່າງບົດລາຍງານການປະເມີນຜົນກະທົບຕໍ່ ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ປະກອບ ມີ ເຈົ້າແຂວງ, ນະຄອນທີ່ກ່ຽວຂ້ອງ ເປັນປະທານ, ຮອງ ເຈົ້າແຂວງ, ນະຄອນ ຜູ້ໃດໜຶ່ງເປັນຮອງປະທານ, ເຈົ້າເມືອງ, ຫົວໜ້າພະແນກການຕ່າງໆ ຂັ້ນທ້ອງຖິ່ນ ທີ່ ກ່ຽວຂ້ອງ, ຕາງໜ້າເຈົ້າຂອງໂຄງການ ແລະ ຕາງໜ້າ ການຈັດຕັ້ງມະຫາຊົນ ເປັນກຳມະການ.

   ໃນກໍລະນີເປັນໂຄງການພັດທະນາ ທີ່ບໍ່ສ້າງຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ຢ່າງຫລວງຫລາຍ ຕາມການຄົ້ນຄ້ວາພິຈາລະນາຂອງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຖືວ່າຄະນະກຳ ມະ ການນີ້ ບໍ່ຈຳເປັນຈະໄດ້ຮັບການແຕ່ງຕັ້ງຂຶ້ນ ແລະ ຈະມີແຕ່ໜ່ວຍງານຄຸ້ມຄອງການທົດແທນຄ່າເສຍ ຫາຍ ແຂວງ, ນະຄອນ, ໜ່ວຍປະຕິບັດການທົດແທນຄ່າເສຍຫາຍ ເມືອງ, ເທດສະບານ ເທົ່ານັ້ນ;

2. ໜ່ວຍງານຄຸ້ມຄອງການທົດແທນຄ່າເສຍຫາຍ ແຂວງ, ນະຄອນ ຊຶ່ງໄດ້ຮັບການແຕ່ງຕັ້ງໂດຍ ຄະນະກຳມະ ການຄຸ້ມຄອງການທົດແທນຄ່າເສຍຫາຍ ແຂວງ, ນະຄອນ ຕາມການຄົ້ນຄວ້ານຳສະເໜີຂອງ ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນ ປະກອບມີ ຜູ້ຕາງໜ້າຈາກຫລາຍຂະແໜ ງ ການ ລວມທັງ ການຈັດຕັ້ງ ມະຫາຊົນ ຂັ້ນແຂວງ, ນະຄອນທີ່ກ່ຽວຂ້ອງ.

   ໃນກໍລະນີໂຄງການທີ່ບໍ່ໄດ້ມີການແຕ່ງຕັ້ງ ຄະນະກຳມະການຄຸ້ມຄອງການທົດແທນຄ່າເສຍຫາຍ ແຂວງ, ນະຄອນ ແມ່ນ ເຈົ້າແຂວງ, ນະຄອນ ເປັນຜູ້ແຕ່ງຕັ້ງ ຕາມການສະເໜີ ຂອງກະຊວງ ຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ;

3. ໜ່ວຍປະຕິບັດການທົດແທນຄ່າເສຍຫາຍ ເມືອງ, ເທດສະບານ ຊຶ່ງໄດ້ຮັບການແຕ່ງຕັ້ງໂດຍ ຄະນະກຳມະ ການຄຸ້ມຄອງການທົດແທນຄ່າເສຍຫາຍ ແຂວງ, ນະຄອນ ຕາມການຄົ້ນຄວ້ານຳສະເໜີຂອງ ຫ້ອງການ ຊັບພະຍາ ກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ ປະກອບ ມີ ຜູ້ຕາງໜ້າຈາກຫລາຍ ຂະແໜງການ ລວມທັງ ການຈັດຕັ້ງ ມະຫາຊົນ ຂັ້ນເມືອງ, ເທດສະບານ ແລະ ນາຍບ້ານທີ່ກ່ຽວຂ້ອງ.

   ໃນກໍລະນີໂຄງການທີ່ບໍ່ໄດ້ມີການແຕ່ງຕັ້ງ ຄະນະກຳມະການຄຸ້ມຄອງການທົດແທນຄ່າເສຍຫາຍ ແຂວງ, ນະຄອນ ແມ່ນ ເຈົ້າແຂວງ, ນະຄອນ ເປັນຜູ້ແຕ່ງຕັ້ງໂດຍກົງ.

## 2. ສິດ ແລະ ໜ້າທີ່ ຂອງ ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ

### 2.1 ສິດ ແລະໜ້າທີ່ຂອງ ຄະນະກຳມະການຄຸ້ມຄອງການທົດແທນຄ່າເສຍຫາຍ ແຂວງ, ນະຄອນ

ຄະນະກຳມະການຄຸ້ມຄອງການທົດແທນຄ່າເສຍຫາຍ ແຂວງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳ, ຄຸ້ມຄອງ ການວາງແຜນ ແລະ ການຈັດຕັ້ງປະຕິບັດ ແຜນການລະອຽດການທົດແທນຄ່າເສຍຫາຍ, ຂອງບໍລິສັດ ແລະ ໜ່ວຍງານທີ່ຢູ່ພາຍໃຕ້ ການຊີ້ນຳຂອງຄະນະກຳມະການຕົນ;
2. ແຕ່ງຕັ້ງ ໜ່ວຍງານຄຸ້ມຄອງການທົດແທນຄ່າເສຍຫາຍ ແຂວງ, ນະຄອນ ແລະ ໜ່ວຍປະຕິບັດການທົດແທນຄ່າເສຍຫາຍ ເມືອງ, ເທດສະບານ;
3. ພິຈາລະນາຮັບຮອງ ແຜນການລະອຽດການທົດແທນຄ່າເສຍຫາຍ ລວມທັງ ກຳນົດນະໂຍບາຍ ແລະ ຫົວໜ່ວຍການທົດແທນຄ່າເສຍຫາຍ;
4. ຮັບຮອງ ແລະ ປະກາດ ວັນຂຶ້ນທະບຽນສິດຂອງຜູ້ໄດ້ຮັບຜົນກະທົບ;
5. ພິຈາລະນາ ແລະ ແກ້ໄຂ ຂໍ້ສະເໜີ ທີ່ກ່ຽວຂ້ອງກັບການທົດແທນຄ່າເສຍຫາຍ ຕາມຂອບເຂດສິດ ແລະ ຄວາມຮັບຜິດຊອບຂອງຕົນ ໃຫ້ທັນເວລາ;
6. ລາຍງານ ການຈັດຕັ້ງປະຕິບັດວຽກງານຂອງຄະນະກຳມະການ ແລະ ໜ່ວຍງານຕ່າງໆ ທີ່ຢູ່ພາຍໃຕ້ການຊີ້ນຳ ຂອງຄະນະກຳມະການຕົນ ໃຫ້ລັດຖະບານ ແລະສຳເນົານຳສົ່ງໃຫ້ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຮັບຊາບ ເປັນແຕ່ລະໄລຍະ;
7. ອອກຂໍ້ຕົກລົງ ຫລື ແຈ້ງການ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແຜນການລະອຽດການທົດແທນຄ່າເສຍຫາຍ;
8. ສະໜອງຂໍ້ມູນຂ່າວສານໃຫ້ແກ່ຜູ້ໄດ້ຮັບຜົນກະທົບ ແລະຜູ້ມີສ່ວນຮ່ວມອື່ນກ່ຽວກັບໂຄງການພັດທະນາ, ຜົນປະໂຫຍດ ແລະຜົນກະທົບທີ່ຕົນຈະໄດ້ຮັບ, ຄວາມຄືບໜ້າກ່ຽວກັບການປະຕິບັດແຜນການລະອຽດການທົດແທນຄ່າເສຍຫາຍ ຕະຫລອດໄລຍະເວລາຈັດຕັ້ງປະຕິບັດໂຄງການພັດທະນາ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງ ລັດຖະບານ.

### 2.2 ສິດ ແລະ ໜ້າທີ່ຂອງ ໜ່ວຍງານຄຸ້ມຄອງການທົດແທນຄ່າເສຍຫາຍ ແຂວງ, ນະຄອນ

ໜ່ວຍງານ ຄຸ້ມຄອງການທົດແທນຄ່າເສຍຫາຍ ແຂວງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການ ໃຫ້ແກ່ ຄະນະກຳມະການ ຄຸ້ມຄອງການທົດແທນຄ່າເສຍຫາຍ ແຂວງ, ນະຄອນ ໃນການປະສານງານກັບທຸກພາກສ່ວນການຈັດຕັ້ງລັດ ແລະ ບໍລິສັດ ເພື່ອປະຕິບັດແຜນການລະອຽດການທົດແທນຄ່າເສຍຫາຍ;
2. ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງໃນລະດັບຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກຕ່າງໆ ແກ່ບໍລິສັດ ໃນການປະຕິບັດ ການທົດແທນຄ່າເສຍຫາຍ;
3. ວາງແຜນການເຄື່ອນໄຫວ ແລະ ແຜນງົບປະມານ ສຳລັບການຈັດຕັ້ງປະຕິບັດວຽກງານ ທີ່ກ່ຽວຂ້ອງກັບການທົດແທນຄ່າເສຍຫາຍ ທີ່ດຳເນີນການໂດຍ ຄະນະຮັບຜິດຊອບ ການທົດແທນຄ່າເສຍຫາຍ ໃນແຕ່ລະຂັ້ນ ໂດຍປະສານສົມທົບກັບ ບໍລິສັດ;

4. ທົບທວນ ແລະ ປະກອບຄຳເຫັນ ຕໍ່ເອກະສານຕ່າງໆ ທີ່ກ່ຽວຂ້ອງກັບ ການທົດແທນຄ່າເສຍຫາຍ;
5. ປະສານງານຢ່າງໃກ້ຊິດກັບ ໜ່ວຍປະຕິບັດການທົດແທນຄ່າເສຍຫາຍ ເມືອງ, ເທດສະບານ ໃນການເຂົ້າຮ່ວມກັບບໍລິສັດ ຈັດຕັ້ງປະຕິບັດແຜນການລະອຽດການທົດແທນຄ່າເສຍຫາຍ;
6. ພິຈາລະນາ ແລະ ແກ້ໄຂຂໍ້ສະເໜີ ທີ່ກ່ຽວຂ້ອງກັບການທົດແທນຄ່າເສຍຫາຍ ແລະ ຄວາມຮັບຜິດຊອບຂອງ ຕົນ ໃຫ້ທັນເວລາ;
7. ລາຍງານ ການຈັດຕັ້ງປະຕິບັດວຽກງານຂອງໜ່ວຍງານຕົນ ຕໍ່ຄະນະກຳມະການຄຸ້ມຄອງການທົດແທນຄ່າເສຍ ຫາຍ ແຂວງ, ນະຄອນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຮັບຊາບ ເປັນແຕ່ລະໄລຍະ;
8. ສະໜອງຂໍ້ມູນຂ່າວສານໃຫ້ແກ່ຜູ້ໄດ້ຮັບຜົນກະທົບ ແລະຜູ້ມີສ່ວນຮ່ວມອື່ນກ່ຽວກັບໂຄງການພັດທະນາ, ຜົນປະໂຫຍດ ແລະຜົນກະທົບທີ່ຕົນຈະໄດ້ຮັບ, ຄວາມຄືບໜ້າກ່ຽວກັບການປະຕິບັດແຜນການລະອຽດການທົດແທນຄ່າເສຍຫາຍ ຕະຫລອດໄລຍະເວລາຈັດຕັ້ງປະຕິບັດໂຄງການພັດທະນາ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ຮັບການມອບໝາຍ ຂອງຄະນະກຳມະການຄຸ້ມຄອງການທົດ ແທນຄ່າເສຍຫາຍ ແຂວງ, ນະຄອນ ແລະ ຂັ້ນເທິງ.

**2.3 ໜ່ວຍປະຕິບັດການທົດແທນຄ່າເສຍຫາຍ ເມືອງ, ເທດສະບານ**

ໜ່ວຍປະຕິບັດການທົດແທນຄ່າເສຍຫາຍ ເມືອງ, ເທດສະບານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ນຳພາ ແລະ ອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດ ບັນດາກິດຈະກຳຕ່າງໆ ທີ່ຕິດພັນກັບແຜນການລະອຽດການທົດແທນຄ່າເສຍຫາຍ ພາຍໃນຂົງເຂດທ້ອງຖິ່ນຕົນ;
2. ສະໜັບສະໜູນ ແລະ ໃຫ້ການຮ່ວມມື ພ້ອມທັງປະສານງານ ແລະເຂົ້າຮ່ວມກັບ ໜ່ວຍງານຄຸ້ມຄອງການທົດແທນຄ່າເສຍຫາຍ ແຂວງ, ນະຄອນ ແລະ ບໍລິສັດ ໃນການຈັດຕັ້ງປະຕິບັດແຜນການລະອຽດການທົດແທນຄ່າເສຍຫາຍ ໃນຂົງເຂດທ້ອງຖິ່ນຕົນຮັບຜິດຊອບ ໃຫ້ທັນເວລາ;
3. ພິຈາລະນາ ແລະ ແກ້ໄຂ ຂໍ້ສະເໜີ ທີ່ກ່ຽວຂ້ອງກັບ ການທົດແທນຄ່າເສຍຫາຍ ຕາມຂອບເຂດສິດ ແລະ ຄວາມຮັບຜິດຊອບຂອງຕົນ ໃຫ້ທັນເວລາ;
4. ລາຍງານ ການຈັດຕັ້ງປະຕິບັດວຽກງານຂອງໜ່ວຍງານຕົນ ຕໍ່ໜ່ວຍງານຄຸ້ມຄອງການທົດແທນຄ່າເສຍຫາຍຂັ້ນແຂວງ, ນະຄອນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຮັບຊາບ ເປັນແຕ່ລະໄລຍະ;
5. ສະໜອງຂໍ້ມູນຂ່າວສານໃຫ້ແກ່ຜູ້ໄດ້ຮັບຜົນກະທົບ ແລະຜູ້ມີສ່ວນຮ່ວມອື່ນກ່ຽວກັບໂຄງການພັດທະນາ, ຜົນປະໂຫຍດ ແລະຜົນກະທົບທີ່ຕົນຈະໄດ້ຮັບ, ຄວາມຄືບໜ້າກ່ຽວກັບການປະຕິບັດແຜນການລະອຽດການທົດແທນຄ່າເສຍຫາຍ ຕະຫລອດໄລຍະເວລາຈັດຕັ້ງປະຕິບັດໂຄງການພັດທະນາ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຈາກ ໜ່ວຍງານຄຸ້ມຄອງການທົດແທນຄ່າເສຍຫາຍ ແຂວງ, ນະຄອນ ແລະ ຂັ້ນເທິງ.

**ເອກະສານຄັດຕິດ  9 ຂັ້ນຕອນການແກ້ໄຂ ຂໍ້ສະເໜີ ຂອງ ຜູ້ໄດ້ຮັບຜົນກະທົບ**

1. ກ່ອນອື່ນຜູ້ໄດ້ຮັບຜົນກະທົບ ຢື່ນຂໍ້ສະເໜີຕໍ່ ໜ່ວຍປະຕິບັດການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ເມືອງ, ເທດສະບານ ແລະ ໜ່ວຍງານຄຸ້ມຄອງການທົດແທນຄ່າເສຍຫາຍ ແຂວງ, ນະຄອນ ໄປຕາມລຳດັບ ເພື່ອໃຫ້ໜ່ວຍງານດັ່ງກ່າວ ປະສານສົມທົບກັບບໍລິສັດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄົ້ນຄ້ວາພິຈາລະນາແກ້ໄຂ ກ່ອນ;

   ຖ້າຜູ້ໄດ້ຮັບຜົນກະທົບ ຍັງບໍ່ທັນເຫັນດີເຫັນພ້ອມ ນຳການແກ້ໄຂນັ້ນ ຫລື ໜ່ວຍງານຄຸ້ມຄອງການທົດແທນຄ່າເສຍຫາຍ ແຂວງ, ນະຄອນ ຫາກເຫັນວ່າໜ່ວຍງານຕົນ ບໍ່ມີຄວາມສາມາດພິຈາລະນາແກ້ໄຂໄດ້ ຜູ້ໄດ້ຮັບຜົນກະທົບ ຫລືໜ່ວຍງານດັ່ງກ່າວກໍມີສິດຢື່ນຂໍ້ສະເໜີຕໍ່ ຄະນະກຳມະການຄຸ້ມຄອງການທົດແທນຄ່າເສຍຫາຍ ແຂວງ, ນະຄອນ ເພື່ອປະສານສົມທົບກັບບໍລິສັດ ສືບຕໍ່ພິຈາລະນາແກ້ໄຂ ແລະ ຖືວ່າຄະນະກຳມະການນີ້ ເປັນຜູ້ພິຈາລະນາແກ້ໄຂຂັ້ນສຸດທ້າຍ;

2. ໃນກໍລະນີ ບັນຫາເກີດຂຶ້ນຊຶ່ງບໍ່ໄດ້ກຳນົດໄວ້ ໃນແຜນການລະອຽດການທົດແທນຄ່າເສຍຫາຍ ຖ້າຜູ້ໄດ້ຮັບຜົນກະທົບ ບໍ່ເຫັນດີນຳການແກ້ໄຂ ຕາມຂັ້ນຕອນທີ່ກຳນົດໄວ້ໃນຂໍ້ 1. ຂ້າງເທິງນີ້, ຝ່າຍທີ່ບໍ່ທັນເຫັນດີກໍ ມີສິດສະເໜີຕໍ່ລັດຖະບານໂດຍຜ່ານການຄົ້ນຄ້ວານຳສະເໜີຂອງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງ ແວດລ້ອມ ເພື່ອພິຈາລະນາແກ້ໄຂຂັ້ນສຸດທ້າຍ;

3. ຖ້າຫາກຍັງບໍ່ທັນເຫັນດີນຳການແກ້ໄຂຂອງລັດຖະບານ ຝ່າຍທີ່ບໍ່ເຫັນດີກໍມີສິດຮ້ອງຂໍຄວາມເປັນທຳຕໍ່ສະພາ ແຫ່ງຊາດ ຫລືຮ້ອງຟ້ອງຕໍ່ສານເພື່ອພິຈາລິນາຕາມຂະບວນການຍຸຕິທຳ.